# ສະຫະພັນບານເຕະແຫ່ງຊາດລາວ

## ລະບຽບວ່າດ້ວຍການລົງວິໄນ

ປີ 2023

# ຄຳນຳ

ອີງຕາມ ກົດລະບຽບ ພາຍໃນ ຂອງ ສະຫະພັນ ບານເຕະ ແຫ່ງຊາດ ລາວ (ສຕລ), ກົດລະບຽບການ ແຂ່ງຂັນ ຂອງທຸກໆລາຍການ ແຂ່ງຂັນ ຂອງ ສຕລ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ, ເພື່ອເຮັດໃຫ້ ການຈັດຕັ້ງ ປະຕິບັດ ການຈັດການແຂ່ງຂັນ ລາຍການຕ່າງໆ ຂອງ ສຕລ ເປັນໄດ້ ດ້ວຍ ຄວາມຮຽບຮ້ອຍ ແລະ ຖືກຕ້ອງ ຕາມ ຫຼັກການ ຂອງ ການແຂ່ງຂັນ ບານເຕະ.

ລະບຽບ ວ່າດ້ວຍ ການລົງວິໄນ ໃນການແຂ່ງຂັນ ບານເຕະ ສະບັບນີ້ ແມ່ນ ນິຕິກຳ ທີ່ສຳຄັນ ທີ່ທຸກໆ ພາກສ່ວນ ທີ່ເຂົ້າຮ່ວມ ການແຂ່ງຂັນ ຂອງ ສຕລ ຕ້ອງໄດ້ ປະຕິບັດ ຢ່າງເຂັ້ມງວດ, ບຸກຄົນໃດ ທີ່ໄດ້ລະເມີດ ລະບຽບການ ທີ່ກຳນົດໄວ້ ໃນລະບຽບ ສະບັບນີ້, ລະບຽບການ ແຂ່ງຂັນ ທຸກໆລາຍການ ແຂ່ງຂັນ ຂອງ ສຕລ ແລະ ລະບຽບການ ອື່ນໆ ທີ່ກ່ຽວຂ້ອງ ຈະຖືກ ປະຕິບັດ ວິໄນ ຢ່າງເຄັ່ງຄັດ.

# ສາລະບານ


ຄຳນຳ..........
1

ສາລະບານ..........2

ພາກທີ 1..........4

ບົດບັນ ຍັດທົ່ວໄປ.......... 4

ມາດຕາ 1 : ຈຸດປະສົງ.......... 4

ມາດຕາ 2: ນິຍາມ ແລະ ການຕີຄວາມໝາຍ..........4

ພາກທີ 2.......... 9

ສິດ, ໜ້າທີ່ ຂອງ ຫ້ອງການ ນິຕິກຳ, ອະນຸ ກຳມະການ ລະບຽບວິໄນ ແລະ ອະນຸ ກຳມະການ ອຸທອນ ຂອງ ສຕລ..........9

ມາດຕາ 3: ສິດ, ໜ້າທີ່ ຂອງ ຫ້ອງການ ນິຕິກຳ, ອະນຸ ກຳມະການ ລະບຽບວິໄນ ແລະ ອະນຸ ກຳມະການ ອຸທອນ ຂອງ ສຕລ..........9

ພາກທີ 3..........11

ການປະທ້ວງ ແລະ ການອຸທອນ..........11

ມາດຕາ 4:  ການປະທ້ວງ..........11

ມາດຕາ   5:   ການອຸທອນ..........
142

ພາກທີ 4..........14

ໂທດ ແລະ ການວາງໂທດ..........14

ມາດຕາ 6: ໂທດ..........14

ມາດຕາ 7: ຈຸດປະສົງ ຂອງ ການລົງໂທດ.......... 14

ມາດຕາ 8: ຫຼັກການລວມ ຂອງ ການວາງໂທດ.......... 14

ມາດຕາ 9: ມາດຕະການລົງໂທດ..........14

ມາດຕາ 10: ໂທດ ແລະ ການວາງໂທດ ຕໍ່ ນັກກິລາ ບານເຕະ.......... 14

ມາດຕາ 11: ໂທດ ແລະ ການວາງໂທດຕໍ່ເຈົ້າໜ້າທີ່ສະໂມສອນ.......... 18

ມາດຕາ 12: ໂທດ ແລະ ການວາງໂທດ ຕໍ່ ສະໂມສອນ..........21

ມາດຕາ 13: ໂທດ ແລະ ການວາງໂທດ ຕໍ່ ກອງເຊຍ.......... 25

ມາດຕາ 14: ໂທດ ແລະ ການວາງໂທດ ຕໍ່ ເຈົ້າໜ້າທີ່ ຈັດ ການແຂ່ງຂັນ..........25

ພາກທີ 5..........26

ບົດບັນຍັດສຸດທ້າຍ......................................................................................................................26

ມາດຕາ 15: ຂອບເຂດ ຂອງ ການຈັດຕັ້ງ ປະຕິບັດ......................................................................................26

ມາດຕາ 16: ການຈັດຕັ້ງ ປະຕິບັດ ນິຕິກໍາ ສະບັບອື່ນ..................................................................................26

ມາດຕາ 17: ມູນຄ່າ ການປັບໃໝ........................................................................................................26

ມາດຕາ 18: ຜົນສັກສິດ....................................................................................................................26

# ພາກທີ 1

# ບົດບັນຍັດ ທົ່ວໄປ

## ມາດຕາ 1 : ຈຸດປະສົງ

ລະບຽບ ສະບັບນີ້ ໄດ້ກຳນົດ ລະບຽບການ ແລະ ມາດຕະການ ການລົງວິໄນ, ການປະພຶດ ຫຼື ຄຸນສົມບັດ ຂອງ ນັກກິລາ, ເຈົ້າໜ້າທີ່ ທີມ, ສະໂມສອນ ແລະ ກອງເຊຍ ເພື່ອ ເຮັດໃຫ້ ການແຂ່ງຂັນ ກິລາ ບານເຕະ ດຳເນີນ ໄປ ດ້ວຍຄວາມຖືກຕ້ອງ, ບໍລິສຸດ, ຍຸຕິທຳ ແລະ ເພື່ອ ເຮັດໃຫ້ ນັກກິລາ, ເຈົ້າໜ້າທີ່ ທີມ, ສະໂມສອນ ລວມເຖິງ ທຸກ ຄົນ ທີ່ມີສ່ວນຮ່ວມ ໃນການແຂ່ງຂັນ ໃຫ້ມີ ນ້ຳໃຈ ນັກກິລາ ເຄົາລົບ ລະບຽບ, ກະຕິກາ ແລະ ມີ ສະຕິ ຊາດ ແນໃສ່ ພັດທະນາ ຊັບພະຍາກອນ ມະນຸດ, ສົ່ງເສີມ ພອນສະຫວັນ ເຮັດໃຫ້ ວົງການ ກິລາ ບານເຕະ ພາຍໃນ ຂອງ ສປປ ລາວ ກ້າວໜ້າ ແລະ ສາມາດ ແຂ່ງຂັນ ກັບ ສາກົນໄດ້, ເພີ່ມທະວີ ຄວາມສາມັກຄີ, ມິດຕະພາບ ສາມາດ ເຊື່ອມໂຍງ ກັບ ອະນຸ ພາກພື້ນ, ພາກພື້ນ ແລະ ສາກົນ.

## ມາດຕາ 2: ນິຍາມ ແລະ ການຕີຄວາມໝາຍ

2.1 **LFF (LAO FOOTBALL FEDERATION):** ສະຫະພັນ ບານເຕະ ແຫ່ງຊາດ ລາວ ໂດຍມີ ໂຕຫຍໍ້ ທາງ ການ ໃນ ພາສາລາວ ແມ່ນ "ສຕລ".

2.2 **FIFA (The Fédération Internationale de Football Association):** ສະຫະພັນ ບານເຕະ ນາໆ ຊາດ.

2.3 **AFC (Asian Football Confederation):** ສະຫະພັນ ບານເຕະ ທະວີບ ອາຊີ.

2.4 **AFF (ASEAN Football Federation):** ສະຫະພັນ ບານເຕະ ອາຊຽນ.

2.5 **L1 (Lao League 1):** ລາວລີກ 1 ຊຶ່ງແມ່ນ ການແຂ່ງຂັນ ບານເຕະ ແບບເຄິ່ງອາຊີບ ຂອງ ສະໂມສອນ ບານເຕະ ລະດັບ ສູງສຸດ ໃນ ສປປ ລາວ.

2.6 **ລະບົບ ວຽກງານ ຕຸລາການ ຂອງ ສຕລ (The Judiciary Committee):** ໝາຍເຖິງ ອະນຸ ກຳມະການ ລະບຽບ ວິໄນ ແລະ ອະນຸ ກຳມະການ ອຸທອນ.

2.6.1 **ອະນຸ ກຳມະການ ລະບຽບ ວິໄນ (Disciplinary Committee):** ແມ່ນ ອະນຸ ກຳມະການ ລະບຽບ ວິໄນ ປະຈຳ ສຕລ ທີ່ຖືກ ແຕ່ງຕັ້ງ ໂດຍ ສຕລ ຊຶ່ງ ປະຕິບັດ ໜ້າທີ່ ແລະ ມີ ພາລະ ບົດບາດ ຕາມ ກົດ ລະບຽບ ຂອງ ສຕລ. ມີ ຫ້ອງການ ນິຕິກຳ ເປັນ ໜ່ວຍງານ ເລຂາ ທິການ ແລະ ຜູ້ຈັດຕັ້ງ ປະຕິບັດ ວຽກງານ.

2.6.2 **ອະນຸ ກຳມະການ ອຸທອນ (Appeal Committee):** ໝາຍເຖິງ ອະນຸ ກຳມະການ ອຸທອນ ປະຈຳ ສຕລ ຖືກແຕ່ງຕັ້ງ ໂດຍ ສຕລ ຊຶ່ງ ປະຕິບັດ ໜ້າທີ່ ແລະ ມີ ພາລະ ບົດບາດ ຕາມ ກົດລະບຽບ ຂອງ ສຕລ. ມີ ຫ້ອງການ ນິຕິກຳ ເປັນ ໜ່ວຍງານ ເລຂາ ທິການ ແລະ ຜູ້ຈັດຕັ້ງ ປະຕິບັດ ວຽກງານ.

2.7 **ການປະທ້ວງ (Protest):** ໝາຍເຖິງ ການໂຕ້ແຍ້ງ ບັນຫາ ໃດໜຶ່ງ ຫຼັງຈາກ ສິ້ນສຸດ ການແຂ່ງຂັນ ທີ່ກ່ຽວຂ້ອງ ກັບ ສິດ ແລະ ຄຸນສົມບັດ ຂອງ ນັກກິລາ ທີ່ເຂົ້າຮ່ວມ ການແຂ່ງຂັນນັ້ນໆ ບໍ່ເປັນໄປ ຕາມ ລະບຽບ ສະບັບນີ້,

ວຽກງານ ເຕັກນິກ ຈັດການແຂ່ງຂັນ ຂອງ ຄະນະ ກຳມະການ ຈັດການແຂ່ງຂັນ ແລະ ການປະພຶດ ປະຕິບັດໂຕ ຂອງ ນັກກິລາ, ຄະນະ ຄູຝຶກ, ເຈົ້າໜ້າທີ່ ຈັດການແຂ່ງຂັນ, ຄະນະ ບໍລິຫານງານ ຂອງ ສະໂມສອນ ແລະ ສະໂມສອນ.

2.8 **ການອຸທອນ (Appeal):** ໝາຍເຖິງ ການແຈ້ງ ເປັນ ລາຍລັກ ອັກສອນ ພ້ອມດ້ວຍ ເຫດຜົນ ທີ່ເປັນ ຮູບປະທຳ ຈາກ ສະໂມສອນ ທີ່ເປັນ ສະມາຊິກ ຂອງ ການແຂ່ງຂັນ ທີ່ບໍ່ເຫັນດີ ການຕັດສິນ ລົງໂທດ ໃນກໍລະນີ ໃດໜຶ່ງ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສະຫະພັນ ບານເຕະ ແຫ່ງຊາດ ລາວ ຕໍ່ກັບ ບຸກຄະລາກອນ ທີ່ກ່ຽວຂ້ອງ ກັບສະໂມສອນ ຫຼື ສະໂມສອນເອງ ເພື່ອໃຫ້ ອະນຸ ກຳມະການ ອຸທອນ ຂອງ ສຕລ ພິຈາລະນາ ຄືນໃໝ່.

2.9 **ອະນຸ ກຳມະການ ຈັດການແຂ່ງຂັນ (Competition Committee):** ໝາຍເຖິງ ອະນຸ ກຳມະການ ຈັດການແຂ່ງຂັນ ປະຈຳ ສຕລ ທີ່ຖືກແຕ່ງຕັ້ງ ໂດຍ ສຕລ ພາລະ ບົດບາດ ຕາມ ກົດລະບຽບ ຂອງ ສຕລ, ມີ ພະແນກຈັດການແຂ່ງຂັນ ເປັນ ໜ່ວຍງານ ເລຂາ ທິການ ແລະ ຜູ້ຈັດຕັ້ງ ປະຕິບັດ ແຜນການ.

2.10 **ອະນຸ ກຳມະການ ກົດໝາຍ (Legal Committee):** ໝາຍເຖິງ ຄະນະ ຈັດການແຂ່ງຂັນ ປະຈຳ ສຕລ ທີ່ຖືກແຕ່ງຕັ້ງ ໂດຍ ສຕລ ມີ ພາລະ ບົດບາດ ຕາມ ກົດລະບຽບ ຂອງ ສຕລ, ມີ ຫ້ອງການ ນິຕິກຳ ເປັນ ໜ່ວຍງານ ເລຂາ ທິການ ແລະ ຜູ້ຈັດຕັ້ງ ປະຕິບັດ ວຽກງານ.

2.11 **ລະບຽບ ການແຂ່ງຂັນ (Competition Regulations):** ໝາຍເຖິງ ບັນດາ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ກັບ ການແຂ່ງຂັນ.

2.12 **ເຈົ້າໜ້າທີ່ ຈັດການແຂ່ງຂັນ (Match Officials):** ໝາຍເຖິງ ບັນດາ ບຸກຄະລາກອນ ຈັດການແຂ່ງຂັນ ທີ່ໄດ້ລົງທະບຽນ ແລະ ຮັບຮອງ ຈາກ ສຕລ:

1. ກຳມະການ ຕັດສິນ (Referee)
2. ກຳມະການ ຊ່ວຍ (Assistant Referees)
3. ກຳມະການ ທີ 4 (Fourth Official)
4. ກຳມະການ ຊ່ວຍທີ 5 ແລະ 6 (AAR ຫຼື Additional Assistant Referee)
5. ຜູ້ປະເມີນ ກຳມະການ ຕັດສິນ (Referee Assessor)
6. ຜູ້ຄວບຄຸມ ການແຂ່ງຂັນ (Match Commissioner)
7. ຜູ້ຊ່ວຍ ຜູ້ຄວບຄຸມ ການແຂ່ງຂັນ (LGC ຫຼື Local General Coordinator)
8. ເຈົ້າໜ້າທີ່ ອື່ນໆ ທີ່ໄດ້ຮັບ ການແຕ່ງຕັ້ງ ຈາກ ອະນຸ ກຳມະການ ຈັດການແຂ່ງຂັນ ປະຈຳ ສຕລ.

2.13 **ເຈົ້າໜ້າທີ່ ສະໂມສອນ (Team Officials):** ໝາຍເຖິງ ບຸກຄະລາກອນ ຂອງ ສະໂມສອນ ທີ່ມີ ຕຳແໜ່ງດັ່ງນີ້:

1. ປະທານ ສະໂມສອນ (President/Chairman)
2. ຜູ້ອຳນວຍການ ເຕັກນິກ ສະໂມສອນ (Club Technical Director)
3. ຜູ້ຈັດການ ສະໂມສອນ (Team Manager)
4. ຫົວໜ້າ ຄູຝຶກ (Head Coach)

5. ຜູ້ຊ່ວຍ ຫົວໜ້າ ຄູຝຶກ (Assistant Coach)
6. ຄູຝຶກ ຜູ້ຮັກສາ ປະຕູ (GK Coach)
7. ແພດ ປະຈຳ ສະໂມສອນ (Medical or Doctor)
8. ນັກກາຍະພາບ ບຳບັດ (Physio Therapist)
9. ເຈົ້າໜ້າທີ່ ສື່ມວນຊົນ (Team Media Officer)
10. ເຈົ້າໜ້າທີ່ ບໍລິຫານ ສະໂມສອນ (Team Staffs): ຜູ້ດູແລອຸປະກອນ (kit-man)

2.14 ຝ່າຍຈັດ ການແຂ່ງຂັນ ຂອງ ສະໂມສອນ ເຈົ້າບ້ານ **(Local Organizing Committee)** ຫຼື **LOC**: ປະກອບມີ ຕຳແໜ່ງຕ່າງໆ ດັ່ງລຸ່ມນີ້:

1. ຜູ້ຈັດການ ສະໜາມ (Stadium Manager)
2. ຜູ້ປະສານງານ ການແຂ່ງຂັນ ປະຈຳ ສະໜາມ (General Coordinator)
3. ຜູ້ປະສານງານ ວຽກງານ ປ້ອງກັນ ປະຈຳ ສະໜາມ (Security Officer)
4. ຜູ້ປະສານງານ ສື່ມວນຊົນ ປະຈຳ ສະໜາມ (Media Officer)
5. ຜູ້ປະສານງານ ການຕະຫຼາດ ປະຈຳ ສະໜາມ (Marketing Officer)
6. ເຈົ້າໜ້າທີ່ ແພດ ປະຈຳ ສະໜາມ (Medical Officer)

2.15 **ຜູ້ຕາງໜ້າ ທາງກົດໝາຍ ຂອງ ນັກກິລາ (Player Intermediary)**: ຜູ້ຕາງໜ້າ ທາງ ກົດໝາຍ ຂອງ ນັກກິລາ ຫຼື Player Intermediary ແມ່ນ ບຸກຄົນ ທີ່ໄດ້ຮັບ ສິດ ດຳເນີນການ ຕາງໜ້າ ໃນ ວຽກງານ ຕ່າງໆ ຂອງ ນັກກິລາ ທີ່ຕົນ ເປັນ ຜູ້ຕາງໜ້າ ໃຫ້, ແຕ່ ຜູ້ຕາງໜ້າ ທາງ ກົດໝາຍ ຂອງ ນັກກິລາ ຈະຕ້ອງ ໄດ້ລົງ ທະບຽນ ກັບ ສຕລ ໃຫ້ ສຳເລັດ ເສຍກ່ອນ ຈຶ່ງ ສາມາດ ດຳເນີນການ ຕາງໜ້າ ໃຫ້ ນັກກິລາ ທີ່ແຂ່ງຂັນ ຢູ່ ໃນ ສປປ ລາວ ໄດ້.

2.16 **ໃບອະນຸຍາດ ສະໂມສອນ (Club Licensing)** ຫຼື **CL**: ແມ່ນ ໃບອະນຸຍາດ ທີ່ອອກ ໂດຍ ສະຫະພັນ ບານເຕະ ແຫ່ງຊາດລາວ ໃຫ້ ສະໂມສອນ ທີ່ສາມາດ ບັນລຸ ເງື່ອນໄຂ ຂອງ ການເຂົ້າຮ່ວມ ການແຂ່ງຂັນ ທີ່ ສຕລ ວາງອອກ ຊຶ່ງ ເອີ້ນວ່າ ໃບອະນຸຍາດ ສະໂມສອນ ລະດັບຊາດ.

2.17 **ໃບອະນຸຍາດ ການໂອນຍ້າຍ ນັກກິລາ ລະຫວ່າງ ປະເທດ (International Transfer Certificate)** ຫຼື **ITC**: ມີສອງ ປະເພດ ຄື ITC ຂອງ ນັກກິລາ ອາຊີບ ແລະ ITC ຂອງ ນັກກິລາ ສະໝັກຫຼິ້ນ.

2.18 **ໃບໂອນຍ້າຍ ນັກກິລາ (Player Transfer Certificate)**: ໝາຍເຖິງ ເອກະສານ ຢັ້ງຢືນ ການໂອນຍ້າຍ ນັກກິລາ ຈາກ ສະໂມສອນ ໜຶ່ງ ໄປຫາ ສະໂມສອນ ໜຶ່ງ.

2.19 ໃບຢືມໂຕ ນັກກິລາ **(Player Loan Certificate )**: ໝາຍເຖິງ ເອກະສານ ການຢືມໂຕ ນັກກິລາ ບານເຕະ ຈາກ ສະໂມສອນ ໃດໜຶ່ງ ໄປ ແຂ່ງຂັນ ໃຫ້ກັບ ສະໂມສອນ ອື່ນ ໂດຍມີ ກຳນົດເວລາ, ເມື່ອຄົບ ກຳນົດ ເວລາ ການຢືມໂຕ ແລ້ວ ນັກກິລາ ທີ່ຖືກຢືມໂຕ ຕ້ອງກັບມາ ສະໂມສອນ ຕົ້ນສັງກັດ ຂອງ ຕົນເອງ ຄືນ.

2.20 **Transfer Matching System (TMS):** ລະບົບ ໂອນຍ້າຍ ນັກກິລາ ອາຊີບ ລະຫວ່າງ ປະເທດ ຂອງ ສະຫະພັນ ບານເຕະ ນາໆຊາດ ທີ່ຄຸ້ມຄອງ ແລະ ຈັດການ ໂດຍ ສະຫະພັນ ບານເຕະ ຂອງ ແຕ່ລະປະເທດ.

2.21 **FIFA Competition Management System (FIFA CMS):** ໝາຍເຖິງ ລະບົບ ການບໍລິຫານ ການຈັດການແຂ່ງຂັນ

2.22 **FIFA CONNECT:** ລະບົບ ການລົງທະບຽນ ຂອງ ສະຫະພັນ ບານເຕະ ນາໆຊາດ (FIFA) ທີ່ນໍາໃຊ້ ເຂົ້າ ໃນ ທຸກການແຂ່ງຂັນ ຂອງ ສຕລ, ຮັບຮອງ ໂດຍ ສະຫະພັນ ບານເຕະ ນາໆຊາດ (FIFA).

2.23 **AD Cards (Accreditation Cards):** ໝາຍເຖິງ ບັດ ທີ່ອອກ ໃຫ້ກັບ ບຸກຄົນ ທີ່ຜ່ານ ການລົງທະບຽນ

ກັບ ຝ່າຍຈັດ ການແຂ່ງຂັນ ເພື່ອຢັ້ງຢືນ ເຖິງສິດ ໃນການເຂົ້າຮ່ວມ ການແຂ່ງຂັນ ຂອງ ບັນດາ ນັກກິລາ, ເຈົ້າໜ້າທີ່ ສະໂມສອນ ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນ.

2.24 **ທີມ (Team):** ໝາຍເຖິງ ນັກກິລາ ແລະ ເຈົ້າໜ້າທີ່ ຂອງ ສະໂມສອນ, ສະມາຊິກ ທີ່ໄດ້ລົງທະບຽນ ໃນການ ແຂ່ງຂັນ ຂອງ ສຕລ.

2.25 **ສະໂມສອນເຈົ້າບ້ານ (Home Team):** ໝາຍເຖິງ ສະໂມສອນ ທີ່ຈັດການແຂ່ງຂັນ ນັດໃດໜຶ່ງ ໃນ ສະໜາມ ແຂ່ງຂັນ ຂອງ ຕົນເອງ.

2.26 **ສະໂມສອນ ມາຢາມ (Away Team) :** ໝາຍເຖິງ ສະໂມສອນ ທີ່ເດີນທາງ ໄປແຂ່ງຂັນ ທີ່ ສະໜາມ ແຂ່ງຂັນ ຂອງ ສະໂມສອນ ອື່ນ.

2.27 **ໃບປົດປ່ອຍນັກກິລາ (Release Letter):** ໝາຍເຖິງ ໜັງສື ຢັ້ງຢືນ ການສິ້ນສຸດ ພັນທະ ຂອງ ນັກກິລາ ກັບ ສະໂມສອນ ຕົ້ນສັງກັດ. ເປັນເອກະສານ ທີ່ ສະໂມສອນ ອອກໃຫ້ ນັກກິລາ ຫຼັງຈາກ ສິ້ນສຸດ ພັນທະ ສັນຍາ ຕໍ່ກັນ.

2.28 **ສະໜາມ ແຂ່ງຂັນ (Stadium):** ໝາຍເຖິງ ບໍລິເວນ ອ້ອມຮອບ ທາງດ້ານໃນ ແລະ ດ້ານນອກ ຂອງ ສະຖານທີ່ ຈັດການແຂ່ງຂັນ

2.29 **ເດີ່ນ ແຂ່ງຂັນ (Field of Play):** ໝາຍເຖິງ ບໍລິເວນ ອ້ອມຮອບ ເດີ່ນຫຍ້າ ທີ່ໃຊ້ ສໍາລັບ ການແຂ່ງຂັນ ໂດຍ ໃຫ້ກວມເອົາເຂດ ເຕັກນິກ ບໍລິເວນ ຂ້າງເດີ່ນ ແຂ່ງຂັນ ພ້ອມ.

2.30 **ສະໂມສອນ ສະມາຊິກ (Clubs):** ໝາຍເຖິງ ອົງກອນ ທີ່ມີ ສະຖານະ ນິຕິ ບຸກຄົນ ຕາມ ການຈົດທະບຽນ ໃນ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ໄດ້ຮັບ ໃບອະນຸຍາດ ໃຫ້ເຂົ້າຮ່ວມ ການແຂ່ງຂັນ ຈາກ ສຕລ.

2.31 ເຫດ ສຸດວິໄສ: ເຫດການ ທີ່ມີ ສາເຫດ ມາຈາກ ໄພທໍາມະຊາດ ທີ່ບໍ່ສາມາດ ຄາດເດົາໄດ້ ເຊັ່ນ: ຟ້າຜ່າ, ໄຟ ໄໝ້, ພາຍຸລົມແຮງ, ນໍ້າຖ້ວມກະທັນຫັນ ແລະ ເຫດການອື່ນໆ ທີ່ບໍ່ສາມາດ ຄາດເດົາ ແລະ ຄວບຄຸມໄດ້.

2.32 **Head-to-Head:** ຜົນສະຫຼຸບ ຂອງ ຜົນການແຂ່ງຂັນ ລະຫວ່າງ ສະໂມສອນ ທີ່ພົບກັນ.

2.33 **ນັກກິລາ (Player):** ໝາຍເຖິງ ນັກກິລາ ບານເຕະ.

2.34 ກອງເຊຍ (Spectators, Supporters): ໝາຍເຖິງບຸກຄົນ ຫຼື ກຸ່ມບຸກຄົນ ທີ່ໃຫ້ກຳລັງໃຈ, ຊຸກຍູ້ ຊ່ວຍເຫຼືອແກ່ທີມ ຫຼື ສະໂມສອນຕົນເອງ

# ພາກທີ 2

## ສິດ, ໜ້າທີ່ ຂອງ ຫ້ອງການ ນິຕິກຳ, ອະນຸ ກຳມະການ ລະບຽບວິໄນ ແລະ ອະນຸ ກຳມະການ ອຸທອນ ຂອງ ສຕລ

### ມາດຕາ 3: ສິດ, ໜ້າທີ່ ຂອງ ຫ້ອງການ ນິຕິກຳ, ອະນຸ ກຳມະການ ລະບຽບ ວິໄນ ແລະ ອະນຸ ກຳມະການ ອຸທອນ ຂອງ ສຕລ

#### 3.1 ສິດ, ໜ້າທີ່ ຂອງ ຫ້ອງການ ນິຕິກຳ

- ເປັນເລຂາ ນຸການ ໃຫ້ກັບ ອະນຸ ກຳມະການ ລະບຽບ ວິໄນ ແລະ ອະນຸ ກຳມະການ ອຸທອນ ໃນການເຄື່ອນໄຫວ ວຽກງານ ຕ່າງໆ ຂອງ ສອງ ອະນຸ ກຳມະການ.
- ກວດກາ ຄວາມຖືກຕ້ອງ ແລະ ສັງລວມ ການປະທ້ວງ ຫຼື ການອຸທອນ ທີ່ເກີດຂຶ້ນ ໃນການແຂ່ງຂັນ ລາຍການຕ່າງໆ ຂອງ ສຕລ ກ່ອນສົ່ງໃຫ້ ອະນຸ ກຳມະການ ທີ່ກ່ຽວຂ້ອງ ພິຈາລະນາ.
- ປະສານງານ ກັບພະແນກ ຈັດການແຂ່ງຂັນ ແລະ ພະແນກອື່ນໆ ທີ່ກ່ຽວຂ້ອງ, ແຈ້ງຜົນການຕັດສິນ ຂອງ ການປະທ້ວງ, ການອຸທອນ ໃຫ້ກັບພາກສ່ວນກ່ຽວຂ້ອງ ຮັບຊາບ ຢ່າງເປັນລາຍລັກ ອັກສອນ.
- ສັງລວມ ໂທດ ບັດເຫຼືອງ, ບັດແດງ ແລະ ອອກ ໜັງສື ແຈ້ງໂທດ ບັດເຫຼືອງ ບັດແດງ ຕາມ ກົດລະບຽບ ຂອງ ການແຂ່ງຂັນ ຕ່າງໆ ຂອງ ສຕລ.
- ກວດກາ, ຮຽບຮຽງ ແລະ ຮ່າງ ກົດລະບຽບ ພາຍໃນ ຂອງ ສຕລ.
- ປະຕິບັດ ໜ້າທີ່ ອື່ນໆ ຕາມການມອບໝາຍ ຈາກ ສຕລ.

#### 3.2 ສິດ, ໜ້າທີ່ ຂອງ ອະນຸ ກຳມະການ ລະບຽບ ວິໄນ

- ພິຈາລະນາ ການປະທ້ວງ ຂອງ ສະໂມສອນ ໃນ ການແຂ່ງຂັນ ແລະ ປະຕິບັດ ວິໄນ ຕໍ່ ການກະທຳຜິດ ຂອງ ພາກສ່ວນ ຕ່າງໆ ທີ່ກ່ຽວຂ້ອງ ກັບ ການແຂ່ງຂັນ ຕາມ ການປະທ້ວງ.
- ພິຈາລະນາ ການປະຕິບັດ ວິໄນ ເຈົ້າໜ້າທີ່ ຈັດການແຂ່ງຂັນ, ເຈົ້າໜ້າທີ່ ສະໂມສອນ, ນັກກິລາ ແລະ ຜູ້ຊົມ ທີ່ ກະທຳຜິດ ກົດລະບຽບ ການແຂ່ງຂັນ ຕາມ ການລາຍງານ ຂອງ ພະແນກ ຈັດການແຂ່ງຂັນ.
- ພິຈາລະນາ ເພີ່ມ ໂທດ, ຫຼຸດ ໂທດ ຫຼື ຍົກເລີກ ໂທດ ໂດຍ ບໍ່ກ່ຽວຂ້ອງ ກັບ ຜົນການແຂ່ງຂັນ. ຍົກເວັ້ນ ກໍລະນີ ຖືກປັບເສຍ ຕາມ ກົດລະບຽບ ການແຂ່ງຂັນ ຈະບໍ່ສາມາດ ພິຈາລະນາ ປ່ຽນແປງໄດ້, ໃນກໍລະນີ ຖືກປັບເສຍ ອະນຸ ກຳມະການ ຈະສາມາດ ພິຈາລະນາ ການຫຼຸດ ໂທດ ຫຼື ຍົກເລີກ ໂທດ ຂອງ ບັດເຫຼືອງ ບັດແດງ ເທົ່ານັ້ນ.
- ປະຕິບັດ ໜ້າທີ່ ອື່ນໆ ຕາມການມອບໝາຍ ຈາກ ສຕລ.

#### 3.3 ສິດ, ໜ້າທີ່ ຂອງ ອະນຸ ກຳມະການ ອຸທອນ

- ພິຈາລະນາ ການອຸທອນ ຈາກສະໂມສອນ, ເຈົ້າໜ້າທີ່ ຈັດການ ແຂ່ງຂັນ, ເຈົ້າໜ້າທີ່ ສະໂມສອນ ແລະ ນັກກິລາ ໃນການແຂ່ງຂັນ ທີ່ບໍ່ເຫັນດີ ກັບ ຄຳຕັດສິນ ຂອງ ອະນຸ ກຳມະການ ລະບຽບ ວິໄນ.

- ພິຈາລະນາ ເພີ່ມໂທດ, ຫຼຸດໂທດ ຫຼື ຍົກເລີກໂທດ ບັດເຫຼືອງ, ບັດແດງ ໂດຍ ບໍ່ກ່ຽວຂ້ອງ ກັບ ຜົນ ຂອງ ການແຂ່ງຂັນ.
- ປະຕິບັດ ໜ້າທີ່ ອື່ນໆ ຕາມການມອບໝາຍ ຈາກ ສຕລ.

# ພາກທີ 3

# ການປະທ້ວງ ແລະ ການອຸທອນ

## ມາດຕາ 4: ການປະທ້ວງ

4.1 ສະໂມສອນ ສາມາດ ປະທ້ວງ ຄຸນສົມບັດ ຂອງນັກກິລາ ຫຼື ບຸກຄະລາກອນ ຂອງ ສະໂມສອນ ທີ່ຂັດກັບ ກົດລະບຽບ ການແຂ່ງຂັນ, ເງື່ອນໄຂ ອົງປະກອບ ຂອງ ການຈັດການແຂ່ງຂັນ (ອົງປະກອບ ພາກສະໜາມ ທີ່ມີສ່ວນ ເຮັດໃຫ້ ການແຂ່ງຂັນ ບໍ່ເປັນໄປ ຕາມລະບຽບ ການແຂ່ງຂັນ) ແລະ ການປະພຶດ ທີ່ບໍ່ເໝາະສົມ ຂອງ ນັກກິລາ ຫຼື ບຸກຄະລາກອນ ສະໂມສອນ ທີ່ມີສ່ວນກ່ຽວຂ້ອງ ກັບການແຂ່ງຂັນ ຫຼື ເຈົ້າໜ້າທີ່ ຈັດການແຂ່ງຂັນ.

4.2 ເງື່ອນໄຂ ຂອງ ການປະທ້ວງ :

4.2.1 ສະໂມສອນ ສາມາດ ດຳເນີນ ການປະທ້ວງ ໂດຍ ສະເໜີ ຈຸດປະສົງ ຕໍ່ ຜູ້ຄວບຄຸມ ການແຂ່ງຂັນ ແລະ ຍື່ນ ປະທ້ວງ ເຊັນໂດຍ ຜູ້ຈັດການ ຂອງ ສະໂມສອນ, ແລ້ວຍື່ນ ຕໍ່ ຜູ້ຄວບຄຸມ ການແຂ່ງຂັນ ຂອງ ນັດ ທີ່ຕ້ອງການ ປະທ້ວງ ພາຍຫຼັງ ສິ້ນສຸດ ການແຂ່ງຂັນ ບໍ່ເກີນ 2 ຊົ່ວໂມງ.

4.2.2 ຫຼັງຈາກນັ້ນ ສະໂມສອນ ຕ້ອງຍື່ນ ໜັງສື ປະທ້ວງ ທີ່ເຊັນໂດຍ ປະທານ ສະໂມສອນ, ຂໍ້ມູນ ຫຼັກ ຖານ ທີ່ກ່ຽວຂ້ອງກັບ ການປະທ້ວງ ແລະ ເງິນຄໍ້າປະກັນ ການປະທ້ວງ ຕໍ່ ຄະນະ ຈັດການ ແຂ່ງຂັນ ພາຍໃນ 48 ຊົ່ວໂມງ ນັບແຕ່ ການແຂ່ງຂັນ ສິ້ນສຸດລົງ.

4.2.3 ວົງເງິນ ໃນການປະທ້ວງ:

- ລາຍການ ແຂ່ງຂັນ ບານເຕະ ແປບຊີ ລາວລີກ1 (PEPSI LAO League1) ຕ້ອງວາງເງິນ ຄ່າປະທ້ວງ ຈຳນວນ 3.000.000 ກີບ/ຄັ້ງ.
- ລາຍການ ການແຂ່ງຂັນ ບານເຕະອື່ນໆ ທີ່ ສຕລ ຈັດຂຶ້ນ ຕ້ອງວາງ ເງິນ ຄ່າປະທ້ວງ ຈຳນວນ 2.000.000 ກີບ/ຄັ້ງ.

4.2.4 ເມື່ອຜູ້ປະທ້ວງ ໄດ້ຍື່ນ ໜັງສື ເບື້ອງຕົ້ນ ທີ່ກຳນົດໄວ້ ໃນຂໍ້ 4.2.1, 4.2.2, 4.2.3 ແລ້ວ ແລະ ອະນຸ ກຳມະການ ລະບຽບ ວິໄນ ຮັບ ໜັງສື ປະທ້ວງແລ້ວ, ຜູ້ທີ່ກ່ຽວຂ້ອງ ໃນຂໍ້ປະທ້ວງ ອາດຖືກ ເຊີນ ເຂົ້າໃຫ້ ຂໍ້ມູນ ເພື່ອ ປະກອບ ໃນການພິຈາລະນາ ການປະທ້ວງ.

4.2.5 ໃນກໍລະນີ ສະໂມສອນ ບໍ່ແຈ້ງ ເຈດຈຳນົງ ໃນການປະທ້ວງ ພາຍຫຼັງ ສິ້ນສຸດ ການແຂ່ງຂັນ ຕາມ ໄລຍະ ເວລາ ທີ່ກຳນົດໄວ້ ແລະ ລວມທັງ ປະກອບ ເງື່ອນໄຂ ທີ່ກ່ຽວຂ້ອງ ກັບ ການປະທ້ວງ ພາຍຫຼັງ ແຈ້ງ ເຈດຈຳນົງ ໃຫ້ ສຳເລັດ ຕາມເວລາ ຄະນະ ກຳມະການ ຈັດການແຂ່ງຂັນ ຈະຖືວ່າ ສະໂມສອນ ສະຫຼະສິດ ໃນ ການປະທ້ວງ.

4.2.6 ພາຍຫຼັງ ທີ່ ອະນຸ ກຳມະການ ລະບຽບ ວິໄນ ໄດ້ຮັບ ເອກະສານ ການປະທ້ວງ ຕ້ອງໄດ້ຮີບຮ້ອນ ພິຈາລະນາ ການປະທ້ວງ ດັ່ງກ່າວ ແລະ ມີ ຄຳຕັດສິນ ຕໍ່ ການປະທ້ວງ ພາຍໃນ 30 ວັນລັດຖະ ການ.

4.2.7 ເງິນຄໍ້າປະກັນ ການປະທ້ວງ ຈະຄືນ ໃຫ້ ຜູ້ປະທ້ວງ ກໍຕໍ່ເມື່ອ ການປະທ້ວງນັ້ນ ມີຜົນ.

4.2.8 ໃນກໍລະນີ ການປະທ້ວງ ບໍ່ມີຜົນ ແລະ ສະໂມສອນ ທີ່ປະທ້ວງ ບໍ່ເຫັນດີ ກັບ ການຕັດສິນ ຂອງ ອະນຸ ກຳມະການ ລະບຽບ ວິໄນ ສະໂມສອນ ສາມາດ ຍື່ນຂໍອຸທອນ ຕໍ່ ອະນຸ ກຳມະການ ອຸທອນ ຕາມມາດ 5 ຂອງລະບຽບ ສະບັບນີ້.

## ມາດຕາ 5: ການອຸທອນ

5.1 ໄລຍະ ເວລາ ຂອງ ການຍື່ນ ຂໍອຸທອນ

ໃນກໍລະນີ ທີ່ ອະນຸ ກຳມະການ ລະບຽບ ວິໄນ ໄດ້ຕັດສິນ ລົງໂທດ ຢ່າງໃດ ຢ່າງໜຶ່ງ ຕໍ່ກັບ ສະໂມສອນ, ນັກກິລາ ແລະ ຜູ້ທີ່ມີ ສ່ວນກ່ຽວຂ້ອງ ແລ້ວ ແລະ ໄດ້ແຈ້ງ ໃຫ້ ພາກສ່ວນ ກ່ຽວຂ້ອງ ທີ່ຖືກ ລົງໂທດ ຮັບຊາບ ແລ້ວ. ຫາກ ພາກສ່ວນ ກ່ຽວຂ້ອງ ທີ່ຖືກລົງໂທດ ຫຼື ຄູ່ກໍລະນີ ໃນການປະທ້ວງ ບໍ່ເຫັນດີ ຕໍ່ກັບຄຳຕັດສິນ ລົງໂທດ ດັ່ງກ່າວນັ້ນ, ພາກສ່ວນ ທີ່ຖືກລົງໂທດ ຫຼື ຄູ່ກໍລະນີ ສາມາດ ຍື່ນໜັງສື ຂໍອຸທອນ ຕໍ່ ຄຳຕັດສິນ ລົງໂທດ ດັ່ງກ່າວ ຕໍ່ ຄະນະ ກຳມະການ ອຸທອນ ຂອງ ສຕລ. ໃນກໍລະນີ ອະນຸ ກຳມະການ ລະບຽບ ວິໄນ ໄດ້ຕັດສິນ ລົງໂທດ ນັກກິລາ, ເຈົ້າໜ້າທີ່ ສະໂມສອນ, ສະໂມສອນ, ກອງເຊຍ ແລະ ໄດ້ແຈ້ງ ໃຫ້ ພວກກ່ຽວຂ້ອງ ຮັບຮູ້ແລ້ວ.

ໃນກໍລະນີ ທີ່ພາກສ່ວນ ທີ່ຖືກລົງວິໄນ ບໍ່ເຫັນດີ ກັບ ຄຳຕັດສິນ ຂອງ ອະນຸ ກຳມະການ ລະບຽບ ວິໄນ ແມ່ນສາມາດ ຍື່ນອຸທອນ ເປັນລາຍລັກ ອັກສອນ ແລະ ຫຼັກຖານ ທີ່ກ່ຽວຂ້ອງ ຕ້ອງມີ ສ່ວນພົວພັນ ກັບ ເອກະສານ ທີ່ຍື່ນ ຕໍ່ ອະນຸ ກຳມະການ ລະບຽບ ວິໄນ ຕໍ່ ອະນຸ ກຳມະການ ອຸທອນ ພາຍໃນ 48 ຊົ່ວໂມງ. ຜົນ ການຕັດສິນ ຂອງ ອະນຸ ກຳມະການ ອຸທອນ ຖືວ່າ ເປັນອັນສິ້ນສຸດ.

5.2 ເງື່ອນໄຂ ໃນການຍື່ນ ຂໍອຸທອນ

ຍື່ນ ຄຳຮ້ອງ ຂໍອຸທອນ ຜ່ານພະແນກ ຈັດການແຂ່ງຂັນ ພາຍໃນ 48 ຊົ່ວໂມງ ຫຼັງຈາກ ໄດ້ຮັບ ແຈ້ງການ ປົດລົງໂທດ ຂອງ ຄະນະ ກຳມະການ ລະບຽບ ວິໄນ. ໂດຍ ຕ້ອງປະກອບ ໜັງສື ຂໍອຸທອນ ທີ່ເຊັນ ໂດຍ ປະທານ ສະໂມສອນ ແລະ ຜູ້ທີ່ກ່ຽວຂ້ອງ ກັບ ການອຸທອນ, ຂໍ້ມູນ ຫຼັກຖານ ທີ່ກ່ຽວຂ້ອງ ກັບ ການ ອຸທອນ ໂດຍຕ້ອງ ເປັນຊຸດດຽວກັນ ທີ່ຍື່ນໃຫ້ ກັບ ອະນຸ ກຳມະການ ລະບຽບ ວິໄນ. ເມື່ອ ອະນຸ ກຳມະການ ອຸທອນ ຮັບ ໜັງສື ການອຸທອນແລ້ວ, ຜູ້ທີ່ກ່ຽວຂ້ອງ ໃນການອຸທອນ ອາດຖືກເຊີນ ເຂົ້າໃຫ້ ຂໍ້ມູນ ເພື່ອປະກອບ ໃນ ການພິຈາລະນາ ການອຸທອນ.

5.3 ການຍື່ນ ຂໍອຸທອນ ຕ້ອງວາງ ເງິນຄ້ຳປະກັນ ດັ່ງນີ້:

5.3.1 ລາຍການ ແຂ່ງຂັນ ກິລາ ບານເຕະ ແປບຊີ ລາວລີກ 1 ຕ້ອງວາງ ເງິນຄ້ຳປະກັນ ຈຳນວນ 3.000.000 ກີບ/ຄັ້ງ.

5.3.2 ລາຍການ ແຂ່ງຂັນ ກິລາ ບານເຕະ ອື່ນໆ ທີ່ ສຕລ ຈັດຂຶ້ນ ຕ້ອງວາງ ເງິນຄ້ຳປະກັນ ຈຳນວນ 2.000.000 ກີບ/ຄັ້ງ

5.3.3 ໃນກໍລະນີ ການອຸທອນ ເປັນຜົນເທົ່ານັ້ນ ສະໂມສອນ ຈຶ່ງຈະໄດ້ຮັບ ເງິນຄືນ. ໃນກໍລະນີ ຫຼຸດຜ່ອນ ໂທດ ຫຼື ຍົກ ໂທດ ບາງຂໍ້ກ່າວຫາ ແມ່ນຈະ ບໍ່ສົ່ງ ເງິນ ດັ່ງກ່າວ ຄືນ.

5.4 ການຍື່ນ ຂໍອຸທອນ ຂອງ ເຈົ້າໜ້າທີ່ ຈັດການແຂ່ງຂັນ ແມ່ນໃຫ້ປະຕິບັດ ຄືກັນກັບຂໍ້ 5.1 ແລະ 5.2 ເຈົ້າໜ້າທີ່ ຈັດການແຂ່ງຂັນ ທີ່ຕ້ອງການ ຍື່ນຂໍອຸທອນ ຕ້ອງວາງ ເງິນຄ້ຳປະກັນ ຈຳນວນ 1.000.000 ກີບ/ຄັ້ງ.

5.5 ພາຍຫຼັງ ອະນຸ ກຳມະການ ອຸທອນ ໄດ້ຮັບ ຄຳຮ້ອງ ຂໍອຸທອນ ຕ້ອງໄດ້ ຮີບຮ້ອນ ພິຈາລະນາ ຄຳຮ້ອງ ດັ່ງກ່າວ ແລະ ມີ ຄຳຕັດສິນ ຕໍ່ ການຂໍອຸທອນ ພາຍໃນ 30 ວັນລັດຖະການ.

5.6 ຄຳຕັດສິນ ຂອງ ອະນຸ ກຳມະການ ອຸທອນ ຖືເປັນທີ່ສິ້ນສຸດ ແລະ ສາມາດ ນຳໄປຈັດຕັ້ງ ປະຕິໄດ້.

5.7 ໃນກໍລະນີ ທີ່ຜູ້ຍື່ນ ຂໍອຸທອນ ຍັງບໍ່ເຫັນດີ ກັບ ຜົນ ຂອງ ການອຸທອນ ສາມາດ ດຳເນີນການຕໍ່ ໃນ ຂັ້ນສານກິລາ ສາກົນ (CAS ຫຼື Court of Arbitration for Sports) ໄດ້ ໂດຍ ສະໂມສອນ ຕ້ອງເປັນ ຜູ້ຮັບຄຳຕັດສິນ ຂອງ ອະນຸ ກຳມະການ ອຸທອນ ຖືເປັນທີ່ສິ້ນສຸດ ແລະ ສາມາດ ນຳໄປຈັດຕັ້ງ ປະຕິໄດ້ຜົດຊອບຄ່າໃຊ້ຈ່າຍ ຂອງ ການດຳເນີນການ ຂໍອຸທອນເອງ ທັງໝົດ.

# ພາກທີ 4

# ໂທດ ແລະ ການວາງໂທດ

## ມາດຕາ 6: ໂທດ

ໂທດ ແມ່ນ ມາດຕະການ ບັງຄັບ ຂອງ ສຕລ ທີ່ກຳນົດໄວ້ ໃນ ລະບຽບ ສະບັບນີ້ ນຳໃຊ້ ເພື່ອ ຈຳກັດ ສິດ, ຕັດສິດ ແລະ ຜົນປະໂຫຍດ ຂອງ ຜູ້ກະທຳຜິດ.

## ມາດຕາ 7: ຈຸດປະສົງ ຂອງການລົງໂທດ

ການລົງໂທດ ບໍ່ພຽງແຕ່ ຈະມີ ຈຸດປະສົງ ລົງໂທດ ຜູ້ກະທຳຜິດ ເທົ່ານັ້ນ ແຕ່ຫາກ ຍັງມີ ຈຸດປະສົງ ເພື່ອ ດັດສ້າງ ແລະ ສຶກສາ ອົບຮົມ ຜູ້ຖືກລົງໂທດ ໃຫ້ມີ ຈິດໃຈ ບໍລິສຸດ ຕໍ່ ການແຂ່ງຂັນ ກິລາ ບານເຕະ, ໃຫ້ ປະຕິບັດ ກົດລະບຽບ ຂອງ ສຕລ ຢ່າງຖືກຕ້ອງ ແລະ ເຄັ່ງຄັດ, ໃຫ້ ເຄົາລົບ ລະບຽບ ການແຂ່ງຂັນ ກິລາ ບານເຕະ ພ້ອມທັງ ປ້ອງກັນ ບໍ່ໃຫ້ ການກະທຳຜິດ ເທື່ອໃໝ່ ເກີດຂຶ້ນ ສຳລັບ ຜູ້ຖືກຕັດສິນ ລົງໂທດ ແລະ ບຸກຄົນອື່ນ ອີກດ້ວຍ. ການລົງໂທດ ບໍ່ມີ ຈຸດປະສົງ ກໍ່ຄວາມທຸກ ທໍລະມານ ຕໍ່ ຮ່າງກາຍ ຫຼື ຢຽບຢ່ຳ ກຽດ ສັກສີ ຂອງມະນຸດ.

## ມາດຕາ 8: ຫຼັກການລວມ ຂອງ ການວາງໂທດ

ຫ້ອງການ ນິຕິກຳ, ອະນຸ ກຳມະການ ລະບຽບ ວິໄນ ເປັນຜູ້ວາງໂທດ ໃນຂອບເຂດ ຂອງມາດຕາ ທີ່ກຳນົດ ໂທດ ໃສ່ຕາມ ການກະທຳຜິດນັ້ນ.

## ມາດຕາ 9: ມາດຕະການ ລົງໂທດ

9.1 ສຶກສາ ອົບຮົມ, ກ່າວເຕືອນ, ແລະ ຂຽນ ໃບສຳຫຼວດ.

9.2 ປະຕິບັດ ຕາມຂອບເຂດ ຂອງ ມາດຕາ ທີ່ກຳນົດໂທດ ໃສ່ຕາມ ການກະທຳຜິດນັ້ນ, ທີ່ໄດ້ລະບຸໄວ້ ໃນ ລະບຽບ ສະບັບນີ້.

9.3 ປະຕິບັດຕາມ ລະບຽບ, ກົດໝາຍ ວ່າດ້ວຍ ກິລາ ແລະ ກາຍຍະກຳ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ມາດຕາ 10: ໂທດ ແລະ ການວາງໂທດ ຕໍ່ນັກກິລາ ບານເຕະ

10.1 ການກະທຳຜິດ ຂອງ ນັກກິລາ ບານເຕະ ຈາກການຫຼິ້ນ ຫຼື ສະແດງ ພຶດຕິກຳ ທີ່ບໍ່ເໝາະສົມ ທັງໃນ ແລະ ນອກ ສະຖານທີ່ ການແຂ່ງຂັນ ໃນມື້ ແຂ່ງຂັນ ຕໍ່ ຝ່າຍກົງກັນຂ້າມ ເຊັ່ນ: ນັກກິລາ ບານເຕະ, ເຈົ້າໜ້າທີ່ ສະໂມສອນ, ສະໂມສອນ, ກອງເຊຍ ສະໂມສອນ ຄູ່ແຂ່ງຂັນ ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນ ຫຼື ບຸກຄົນທົ່ວໄປ ຕ້ອງຖືກລົງໂທດ ຕາມ ຫຼັກການ ໃນມາດຕາ 9 ແລະ ມາດຕາ 10 ຂອງ ລະບຽບ ສະບັບນີ້.

10.2 ນຸ່ງເຄື່ອງ ບໍ່ຖືກຕ້ອງ ຕາມ ລະບຽບ ການແຂ່ງຂັນ ວາງອອກ ແມ່ນບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ ແລະ ປັບໃໝ 200.000 ກີບ/ຄັ້ງ.

10.3 ໄດ້ຮັບ ບັດເຫຼືອງ ໝາຍເຖິງ ການເຕືອນ, ປັບໃໝ ບັດລະ 500.000 ກີບ/ບັດ

10.4 ໄດ້ຮັບ ບັດເຫຼືອງ ສະສົມ 3 ບັດ ໃຫ້ພັກ 1 ນັດ.

10.5 ກຳມະການ ຕັດສິນ ໃຫ້ອອກຈາກ ການແຂ່ງຂັນ (ໄດ້ຮັບບັດແດງ) ຍ້ອນສາເຫດ :

10.5.1 ການປະພຶດ ຢ່າງຮ້າຍແຮງ (Violent conduct) ເຊັ່ນ: ເຈດຕະນາ ທຳຮ້າຍ ນັກກິລາ ຄູ່ແຂ່ງຂັນ ໂດຍ ບໍ່ໄດ້ ຫຼິ້ນບານ ຫຼື ໝາກບານ ບໍ່ຢູ່ ໃນໄລຍະ ຂອງ ການຫຼິ້ນ ຫຼື ໃຊ້ກຳລັງ ຮຸນແຮງ ເກີນກວ່າເຫດ ເຮັດໃຫ້ເກີດ ອັນຕະລາຍ ຕໍ່ ຄູ່ແຂ່ງຂັນ ແລະ ລວມເຖິງ ການກະທຳຜິດ ຕໍ່ ເຈົ້າໜ້າທີ່ ສະໂມສອນ ຄູ່ແຂ່ງຂັນ, ນັກກິລາ ສຳຮອງ ແລະ ກຳມະການ ຕັດສິນ ຜູ້ກະທຳຜິດ ຈະຖືກ ລົງໂທດ ບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 3 ນັດຖັດໄປ ຫຼື ອາດຈະຫຼາຍກວ່ານັ້ນ ຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ ແລະ ປັບໃໝ 1.000.000 ກີບຕໍ່ຄັ້ງ.

10.5.2 ກັດ (Biting), ຖົ່ມນ້ຳລາຍ (Spitting) ໃສ່ ບຸກຄົນອື່ນ ຜູ້ກະທຳຜິດ ຈະຖືກ ລົງໂທດ ໂດຍ ບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 3 ນັດຖັດໄປ.

10.5.3 ຫຼິ້ນຜິດ ກະຕິກາ ຢ່າງຮ້າຍແຮງ (Serious Foul play) ເຊັ່ນ: ຫຼິ້ນ ຮຸນແຮງ ເກີນກວ່າເຫດ ໃນ ຂະນະຍາດ ໝາກບານ ຊຶ່ງ ນຳໄປສູ່ ຄວາມບາດເຈັບ ຂອງ ຝ່າຍກົງກັນຂ້າມ ຜູ້ກະທຳຜິດ ຈະຖືກ ລົງໂທດ ໂດຍ ບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 3 ນັດ ຖັດໄປ.

10.5.4 ສະກັດກັ້ນ ເພື່ອໃຫ້ຄູ່ຕໍ່ສູ້ ເສຍໂອກາດ ການໄດ້ ປະຕູ ຢ່າງຈະແຈ້ງ ໂດຍ ໃຊ້ມື ຫຼິ້ນບານ (ຍົກເວັ້ນ ຜູ້ຮັກສາ ປະຕູ ທີ່ຢູ່ ໃນເຂດໂທດ ຂອງຕົນເອງ) (DOGSO) Denying and Obvious Goal- Scoring Opportunity ຜູ້ກະທຳຜິດ ຈະຖືກ ລົງໂທດ ໂດຍ ບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 3 ນັດຖັດໄປ.

10.5.5 ສະກັດກັ້ນ ເພື່ອໃຫ້ ຄູ່ຕໍ່ສູ້ ເສຍໂອກາດ ການໄດ້ປະຕູ ຢ່າງຈະແຈ້ງ (DOGSO) ທີ່ກຳລັງ ເຄື່ອນທີ່ ໄປໜ້າປະຕູ ຂອງຝ່າຍຕົນ ໂດຍຫຼິ້ນ ຜິດກະຕິກາ ຈະຖືກ ລົງໂທດດ້ວຍ ການເສຍ ບານໃໝ ຫຼື ລູກຈຸດໂທດ (Free kick or Penalty Kick) ແລະ ຜູ້ກະທຳຜິດ ຈະຖືກ ລົງໂທດ ໂດຍບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 3 ນັດຖັດໄປ.

10.5.6 ໃຊ້ ວາຈາ ຫຼື ຄຳເວົ້າ ທີ່ບໍ່ເໝາະສົມ (Offensive Language), ດູໝິ່ນ, ຫຍຽດຍາມ ຫຍາບຄາຍ, ດ່າ ຫຼື ສະແດງທ່າທີ, ທ່າທາງ ທີ່ບໍ່ເໝາະສົມ (Insulting or Abusive Language) ຊຶ່ງ ກຳມະການ ຕັດສິນ ຈະເປັນ ຜູ້ພິຈາລະນາ ລຳດັບ ຄວາມຮຸນແຮງ ຂອງ ການກະທຳຜິດ ດັ່ງກ່າວ. ຜູ້ກະທຳຜິດ ຈະຖືກ ລົງໂທດ ໂດຍ ບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 3 ນັດຖັດໄປ.

10.5.7 ຫຼັງຈາກ ໄດ້ຮັບ ບັດເຫຼືອງ ໃບທີ 2 ໃນນັດດຽວກັນ (Receive a Second Caution in the Same Match) ຜູ້ກະທຳຜິດ ຈະຖືກ ລົງໂທດ ໂດຍບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 2 ນັດຖັດໄປ ຈະຖືກ ປັບໃໝ 500.000 ກີບ. ໄດ້ຮັບ ໃບແດງ ໂດຍກົງ (ອີງຕາມ ຂໍ້ 10.5.1 – 10.5.6) ຈະໄດ້ພັກ 3 ນັດ ແລະ ປັບໃໝ 1.000.000 ກີບ

10.6 ການປະພຶດ ທີ່ບໍ່ເໝາະສົມ ຫຼື ຮຸນແຮງ ທີ່ບໍ່ກ່ຽວ ກັບການຫຼິ້ນ ບານ ຫຼື ບານ ອອກຈາກ ການຫຼິ້ນ (ບານຕາຍ) ມີການກະທຳຜິດ ຕໍ່ບຸກຄົນອື່ນໆ ເຊັ່ນ: ນັກກິລາ, ເຈົ້າໜ້າທີ່ ສະໂມສອນ (ຝ່າຍຕົນເອງ), ນັກກິລາ, ເຈົ້າໜ້າທີ່ ສະໂມສອນ (ຝ່າຍກົງກັນຂ້າມ), ກຳມະການ ຕັດສິນ, ຝ່າຍຈັດການ ແຂ່ງຂັນ, ຜູ້ຊົມ, ກອງເຊຍ ທີ່ເຮັດໃຫ້ມີການ ເສື່ອມເສຍ ຊື່ສຽງ ຂອງ ສຕລ ຈະຖືກ ປັບໃໝ 5.000.000 ກີບ (ຖ້າກຳມະການ ຍັງບໍ່ທັນໄດ້ໃຫ້ບັດ) ແລະ ຈະໄດ້ຖືກ ພິຈາລະນາ ເພີ່ມ ການລົງໂທດ ຫຼື ມີການປັບໃໝ ເພີ່ມເຕີມ ອີງຕາມ ຜົນ ຂອງ ຄວາມເສຍຫາຍ ຈາກ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

10.6.1 ທຳລາຍ ວັດຖຸ ອຸປະກອນ, ຊັບສິນ ຂອງ ສະຖານທີ່ ຈັດການແຂ່ງຂັນ ຫຼື ບຸກຄົນອື່ນ ໃນສະຖານທີ່ ຈັດການແຂ່ງຂັນ ຈະຖືກ ປັບໃໝ 3.000.000 ກີບ ແລະ ໃຫ້ຊົດໃຊ້ ຄ່າເສຍຫາຍ ຕາມ ຄວາມເສຍຫາຍ ຕົວຈິງ ແລະ ພິຈາລະນາ ເພີ່ມການລົງໂທດ ຫຼື ປັບໃໝ ເພີ່ມເຕີມ ອີງຕາມ ຄວາມເສຍຫາຍ ຈາກ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

10.7 ອອກຈາກ ເຂດເຕັກນິກ ໃນລະຫວ່າງ ການແຂ່ງຂັນ ໂດຍບໍ່ມີ ເຫດຜົນ ສົມຄວນ ຫຼື ນັກກິລາ ທີ່ຖືກ ປ່ຽນຕົວແລ້ວ ແຕ່ບໍ່ປະຕິບັດ ຕາມກະຕິກາ ຈະຖືກ ປັບໃໝ 500.000 ກີບ (ຖ້າ ກຳມະການ ຍັງບໍ່ທັນໄດ້ ໃຫ້ບັດ).

10.8 ແລ່ນ ອອກຈາກ ເດີ່ນແຂ່ງຂັນ ດ້ວຍຄວາມດີໃຈ ທີ່ໄດ້ ປະຕູ ຈົນຕ້ອງ ເຮັດໃຫ້ ເສຍເວລາ ໃນ ການແຂ່ງຂັນ ຫຼື ປີນ ຮົ້ວກັ້ນເດີ່ນ ຫຼື ແກ້ເສື້ອ ການແຂ່ງຂັນ ອອກ ຫຼື ຄຸມຫົວ ດ້ວຍ ໜ້າກາກ ຊຶ່ງ ບໍ່ແມ່ນ ອຸປະກອນ ຂອງ ຜູ້ຫຼິ້ນ ຫຼື ວັດຖຸ ອື່ນໆ ທີ່ ບໍ່ໄດ້ ຮັບອະນຸຍາດ ໃຫ້ນຳໃຊ້ ຈະຖືກ ປັບໃໝ 500.000 ກີບ ແລະ ຖືກລົງໂທດ ກະຕິກາ ການແຂ່ງຂັນ.

10.9 ສະແດງ ກິລິຍາ, ສະແດງ ສັນຍາລັກ, ທ່າທາງ ແບບຍົ້ວຍຸ, ຂົ່ມຂູ່ ກອງເຊຍ ຂອງ ທີມຄູ່ຕໍ່ສູ້ ຫຼື ບຸກຄົນໃດໆ ອັນຈະນຳໄປສູ່ ຄວາມບໍ່ສະຫງົບ ຮຽບຮ້ອຍ ຫຼື ດຶງ ເສື້ອ ຂຶ້ນສູງ ເພື່ອ ສະແດງ ຂໍ້ຄວາມ ໃນເສື້ອ ດ້ານໃນ ທີ່ໃສ່ຢູ່ ໃຫ້ ບຸກຄົນອື່ນ ໄດ້ເຫັນ ຂໍ້ຄວາມ ໃນລັກສະນະ ເສຍຫາຍ ຕໍ່ສັງຄົມ, ສາດສະໜາ, ການເມືອງ, ສຕລ, ເຈົ້າໜ້າທີ່ ຈັດການແຂ່ງຂັນ, ຜູ້ອຸປະຖຳ ການແຂ່ງຂັນ ຂອງ ສຕລ ຫຼື ດຶງ ໂສ້ງລົງ ຈົນເຫັນ ໂສ້ງໃນ ແມ່ນຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 2 ນັດ ແລະ ປັບໃໝເງິນ 1.000.000 ກີບ/ຄົນ/ຄັ້ງ.

10.10 ດ່າ ດ້ວຍຖ້ອຍຄຳ ທີ່ຫຍາບຄາຍ, ເຢາະເຢີ້ຍ, ຢຽບຫຍາມ, ນາບຄູ່ ຫຼື ການຢຽດສີຜິວ, ຢຽດເຊື້ອຊາດ ຕໍ່ບຸກຄົນໃດໜຶ່ງ ທີ່ຊັດເຈນ, ຈະແຈ້ງ ດ້ວຍ ພາສາກາຍ ແລະ ການກະທຳອັນ ບົ່ງບອກ ເຖິງຄວາມໝາຍ ຂ້າງເທິງ ທັງພາຍໃນ ແລະ ນອກ ເດີ່ນ ແຂ່ງຂັນ (ກ່ອນ, ລະຫວ່າງ, ຫຼື ຫຼັງ ການແຂ່ງຂັນ) ແມ່ນຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 3 ນັດ ແລະ ປັບໃໝ ເງິນ 2.000.000 ກີບ/ຄົນ/ຄັ້ງ.

10.11 ຊັກຊວນ ນັກກິລາ ໃນ ທີມ ປະທ້ວງ ການຕັດສິນ ຂອງ ກຳມະການ ອັນເຮັດໃຫ້ ການແຂ່ງຂັນ ທີ່ກຳລັງດຳເນີນຢູ່ ໄດ້ຢຸດ ສະງັກລົງ ໃນຊົ່ວຂະນະ ຈະຖືກ ປັບໃໝ 1.000.000 ກີບ ແລະ ຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 2 ນັດຖັດໄປ.

10.12 ພະຍາຍາມ ທຳຮ້າຍ ຮ່າງກາຍ ຕໍ່ ບຸກຄົນໃດໜຶ່ງ ຫຼື ຊັກຊວນ ເພື່ອນຮ່ວມທີມ ອັນນຳໄປສູ່ ເຫດການຄວາມຮຸນແຮງ ແມ່ນຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 2 ນັດ ຫຼື ຫຼາຍກວ່າ ອີງຕາມ ການພິຈາລະນາ ຕັດສິນ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

10.13 ທຳຮ້າຍ ຮ່າງກາຍ ບຸກຄົນໃດໜຶ່ງ ຈະມີໂທດ ຕາມກໍລະນີ ດັ່ງນີ້:

10.13.1 ຖືກພັກ ການເຂົ້າຮ່ວມແຂ່ງຂັນ 3 ນັດຖັດໄປ ແລະ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ/ຄົນ. ຖ້າເກີດຂຶ້ນ ກັບ ກຳມະການ ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນ ຈະຖືກ ປັບໃໝເພີ່ມ ເປັນເງິນ ສູງສຸດ 10.000.000 ກີບ/ຄັ້ງ/ຄົນ ແລະ ຈະຖືກ ສັ່ງໃຫ້ພັກ ເຂົ້າຮ່ວມ ການແຂ່ງຂັນ 4 ນັດຖັດໄປ, ນອກຈາກນັ້ນ, ຕ້ອງຊົດໃຊ້ ຄ່າປິ່ນປົວ ຜູ້ໄດ້ຮັບບາດເຈັບ ຕາມຄວາມເປັນຈິງ ແລະ ມີຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

10.13.2 ເຈດຕະນາ ເຮັດໃຫ້ ເກີດອັນຕະລາຍ ຕໍ່ຮ່າງກາຍ ຄູ່ກໍລະນີ ຈົນເຖິງ ຂັ້ນສາຫັດ ແມ່ນຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 3-6 ນັດຖັດໄປ ແລະ ປັບໃໝ ເງິນ ສູງສຸດ 20.000.000 ກີບ/ຄັ້ງ ແລະ ຮັບຜິດຊອບ ຄ່າເສຍຫາຍ ໃນການປິ່ນປົວ ຄູ່ກໍລະນີ ອີງຕາມ ຄວາມເປັນຈິງ ທີ່ເກີດຂຶ້ນ. ຖ້າເກີດ

ຂຶ້ນ ກັບ ກຳມະການ ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນ ແມ່ນຈະຖືກ ປັບໃໝ ເພີ່ມ ເປັນເງິນ ສູງສຸດ 50.000.000 ກີບ/ຄັ້ງ ແລະ ຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 6 ນັດຖັດໄປ ແລະ ມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

10.13.3 ເປັນເຫດ ໃຫ້ເກີດ ອັນຕະລາຍ ຕໍ່ຮ່າງກາຍ ຄູ່ກໍລະນີ ຈົນເຖິງ ຂັ້ນ ເສຍຊີວິດ ຈະບໍ່ ອະນຸຍາດ ໃຫ້ ເຂົ້າຮ່ວມ ການແຂ່ງຂັນ ຕະຫຼອດ ຊີວິດ ແລະ ປັບໃໝ ເງິນ ສູງສຸດ 50.000.0000 ກີບ/ຄັ້ງ ແລະ ຮັບຜິດຊອບ ຄ່າເສຍຫາຍ ໃຫ້ຄູ່ກໍລະນີ ອີງຕາມ ຄວາມເປັນຈິງ ທີ່ເກີດຂຶ້ນ, ຖ້າເກີດຂຶ້ນ ກັບ ກຳມະການ ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນ ແມ່ນຈະຖືກ ປັບໃໝ ເພີ່ມເປັນເງິນ ສູງສຸດ 100.000.000 ກີບ/ຄັ້ງ ແລະ ມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ ກ່ຽວຂ້ອງ ຂອງ ສປປ ລາວ.

10.14 ການກະທຳຜິດ ກ່ຽວກັບ ບັດ AD Card:

- ບໍ່ມີບັດ AD Card ແມ່ນ ບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ ປັບໃໝ 300.000 ກີບຕໍ່ຄົນ/ຄັ້ງ, ຄັ້ງທີ່ສອງ ປັບໃໝ 500.000 ກີບ ຕໍ່ຄົນ/ຄັ້ງ.
- ອອກບັດໃໝ່ ບັດລະ 50.000 ກີບ/ບັດ.
- ບັດເສຍ ເຮັດໃໝ່ ບັດລະ 200.000 ກີບ/ບັດ.
- ບັດເກົ່າ ຫຼື ໃຊ້ບໍ່ໄດ້ ຕ້ອງການ ເຮັດໃໝ່ ຕ້ອງຈ່າຍ ຄ່າທຳນຽມ ຈຳນວນ 100.000 ກີບ/ບັດ.

10.15 ມີ ສ່ວນຮ່ວມ, ສົມຮູ້ຮ່ວມຄິດ, ມີ ສ່ວນກ່ຽວຂ້ອງ ກັບການລົ້ມບານ (Match manipulation) ໃນການ ແຂ່ງຂັນ ລາຍການ ໃດໜຶ່ງ ຂອງ ສຕລ ຫຼື ການແຂ່ງຂັນ ທາງການ ລາຍການອື່ນໆ ຈະຖືກ ຫ້າມ ບໍ່ໃຫ້ ເຂົ້າ ຮ່ວມ ທຸກກິດຈະກຳ ທີ່ກ່ຽວຂ້ອງ ກັບການແຂ່ງຂັນທີ່ ສຕລ ຈັດຂຶ້ນ ຕະຫຼອດ ຊີວິດ ແລະ ຍັງຈະຖືກ ປັບໃໝ ເງິນ 500.000.000 ກີບ ແລະ ຍັງຕ້ອງ ມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

10.16 ເຮັດສັນຍາ ທັບຊ້ອນ ໂດຍບໍ່ຖືກຕ້ອງ ຕັ້ງແຕ່ 2 ສະໂມສອນ ຂຶ້ນໄປ ຈະບໍ່ ໃຫ້ ເຂົ້າຮ່ວມ ການແຂ່ງຂັນ 1 ລະດູການ.

10.17 ນັກກິລາ ທີ່ຖືກກວດພົບວ່າ ໃຊ້ ສານກະຕຸ້ນ ໃນກໍລະນີ ການແຂ່ງຂັນ ຍັງດຳເນີນຢູ່ ຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ ຈຳນວນ 6 ນັດ ແລະ ຈະຖືກ ປັບໃໝ ເງິນ ຈຳນວນ ສູງສຸດ 10.000.000 ກີບ ອີງຕາມ ການພິຈາລະນາ ຂອງອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ, ໃນກໍລະນີ ຖືກກວດພົບວ່າ ໃຊ້ສານ ກະ ຕຸ້ນ ຫຼັງຈາກ ສຳເລັດ ການແຂ່ງຂັນ ລາຍການນັ້ນແລ້ວ ຈະຖືກ ລົງໂທດ ໂດຍການຖອນ ລາງວັນ ແລະ ເງິນ ລາງວັນ ທີ່ໄດ້ຮັບ ຈາກການແຂ່ງຂັນ ຄືນໃຫ້ກັບ ສຕລ.

10.18 ປອມແປງ ອາຍຸ ຫຼື ປອມແປງ ເອກະສານ ຕ່າງໆ ໃນການຢັ້ງຢືນ ໂຕຕົນ ເຊັ່ນ: ປຶ້ມສຳມະໂນຄົວ, ບັດປະຈຳຕົວ, ໜັງສື ຜ່ານແດນ, ເອກະສານ ດ້ານການສຶກສາ ແລະ ອື່ນໆ. ຈະຖືກຫ້າມ ບໍ່ໃຫ້ເຂົ້າຮ່ວມ ການແຂ່ງຂັນ 3-5 ປີ ແລະ

ຈະຖືກ ປັບໃໝ ເງິນ ສູງສຸດ 50.000.000 ກີບ ແລະ ມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

10.19 ນັກກິລາ ທີມໃດ ຫາກມີ ຄວາມຜິດ ກ່ຽວຂ້ອງ ກັບ ຢາເສບຕິດ ມີໂທດ ດັ່ງນີ້:

- ກໍລະນີ ຢູ່ໃນ ລະຫວ່າງ ການພິຈາລະນາ ໂທດ ໃຫ້ຢຸດພັກ ການເຂົ້າຮ່ວມ ການແຂ່ງຂັນ.
- ໃນກໍລະນີ ຄະດີ ຖືກຕັດສິນ ວ່າມີຄວາມຜິດ ແມ່ນບໍ່ໃຫ້ເຂົ້າຮ່ວມ ການແຂ່ງຂັນ ທຸກລາຍການ ຂອງ ສຕລ ເປັນເວລາ 5 ປີ ນັບຈາກ ມື້ທີ່ຮັບຊາບ ຜົນການຕັດສິນ ຂອງຄະດີ.

10.20 ໃນກໍລະນີ ນັກກິລາ ໄດ້ເຮັດຜິດ ໃນລະຫວ່າງ ການແຂ່ງຂັນ ແຕ່ກຳມະການ ຕັດສິນ ບໍ່ໄດ້ລົງໂທດ (ບັດເຫຼືອງ) ຫຼື ໄລ່ອອກ ຈາກການແຂ່ງຂັນ (ບັດແດງ) ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ ສາມາດພິຈາລະນາ ການລົງໂທດ ຕໍ່ ການກະທຳ ດັ່ງກ່າວໄດ້ ໂດຍອີງຕາມ ລະບຽບ ສະບັບນີ້.

10.21 ວິພາກ ວິຈານ ສຕລ ຜ່ານ ຊ່ອງທາງ ຕ່າງໆ ເຮັດໃຫ້ ເກີດຄວາມເສຍຫາຍ ຕໍ່ພາບລັກ, ກຽດສັກສີ, ຊື່ສຽງ ແລະ ການປະຕິບັດ ໜ້າທີ່ ຂອງ ສຕລ ໂດຍ ບໍ່ມີມູນ ຄວາມຈິງ ຈະຖືກປັບໃໝ ເງິນສູງສຸດ 50.000.000 ກີບ/ຄົນ/ຄັ້ງ, ຖືກພິຈາລະນາ ຫ້າມ ປະຕິບັດ ໜ້າທີ່ ໃນການແຂ່ງຂັນ ຕາມການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຫຼື ອາດຈະຖືກ ດຳເນີນ ຄະດີ ຕາມ ກົດໝາຍ ວ່າດ້ວຍ ກິລາ-ກາຍະກຳ.

10.22 ທຳລາຍ ວັດຖຸ ອຸປະກອນ, ຊັບສິນ ຂອງ ສະຖານທີ່ ຈັດການແຂ່ງຂັນ ຫຼື ບຸກຄົນອື່ນ ໃນ ສະຖານທີ່ ຈັດການແຂ່ງຂັນ ຖືກປັບໃໝ 3.000.000 ກີບ ແລະ ໃຫ້ຊົດໃຊ້ ຄ່າເສຍຫາຍ ຕາມ ຄວາມເສຍຫາຍ ຕົວຈິງ ແລະ ພິຈາລະນາ ເພີ່ມ ການລົງໂທດ ຫຼື ມີ ການປັບໃໝ ເພີ່ມເຕີມ ອີງຕາມ ຜົນ ຂອງ ຄວາມເສຍຫາຍ ຈາກ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

## ມາດຕາ 11: ໂທດ ແລະ ການວາງໂທດ ຕໍ່ ເຈົ້າໜ້າທີ່ ສະໂມສອນ

11.1 ເຈົ້າໜ້າທີ່ ສະໂມສອນ ສະແດງ ພຶດຕິກຳ ທີ່ບໍ່ເໝາະສົມ ທັງໃນ ແລະ ນອກ ເດີ່ນ ແຂ່ງຂັນ ຕໍ່ ຝ່າຍກົງກັນຂ້າມ ເຊັ່ນ: ນັກກິລາ ບານເຕະ, ເຈົ້າໜ້າທີ່ ສະໂມສອນ, ສະໂມສອນ, ກອງເຊຍ ສະໂມສອນ ຄູ່ແຂ່ງຂັນ; ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນ ຫຼື ບຸກຄົນ ທົ່ວໄປ ຕ້ອງຖືກລົງໂທດ ຕາມມາດຕາ 9 ແລະ ມາດຕາ 11.

11.2 ການກະທຳຜິດ ກ່ຽວກັບບັດ AD Card:

- ບໍ່ມີ ບັດ AD Card ແມ່ນ ບໍ່ໃຫ້ ເຂົ້າຮ່ວມ ການແຂ່ງຂັນ ປັບໃໝ 300.000 ກີບ ຕໍ່ຄົນ, ຄັ້ງທີ່ສອງ ປັບໃໝ 500.000 ກີບ.
- ອອກບັດໃໝ່ ບັດລະ 50.000 ກີບ ຕໍ່ຄົນ.
- ບັດເສຍ ເຮັດໃໝ່ ບັດລະ 200.000 ກີບ ຕໍ່ຄົນ/ຄັ້ງ.
- ບັດເກົ່າ ຫຼື ໃຊ້ບໍ່ໄດ້ ຕ້ອງການ ເຮັດໃໝ່ ຕ້ອງຈ່າຍ ຄ່າທຳນຽມ ຈຳນວນ 100.000 ກີບ/ບັດ.

11.3 ອອກນອກ ຂອບເຂດ ເຕັກນິກ ໃນລະຫວ່າງ ການແຂ່ງຂັນ ໂດຍບໍ່ມີເຫດຜົນ ອັນສົມຄວນ ໂດຍໄດ້ຮັບການຕັກເຕືອນ ຈາກ ກຳມະການຕັດສິນແລ້ວ ຍັງສືບຕໍ່ ພຶດຕິກຳ ດັ່ງກ່າວ, ຜູ້ກະທຳຜິດ ຈະຖືກ ລົງໂທດປັບໃໝ ເງິນຈຳນວນ 500.000 ກີບ/ຄັ້ງ, ຖ້າຫາກ ຍັງບໍ່ໄດ້ຖືກລົງໂທດ ຈາກ ກຳມະການ ຕັດສິນ ໃນການແຂ່ງຂັນ.

11.4 ນຸ່ງເຄື່ອງ ບໍ່ສຸພາບ ຈະຖືກ ປັບໃໝ 500.000 ກີບ/ຄົນ/ຄັ້ງ.

11.5 ໄດ້ຮັບ ບັດເຫຼືອງ 1 ໃບປັບໃໝ 500.000 ກີບ.

11.6 ໄດ້ຮັບ ບັດເຫຼືອງ ສະສົມ 3 ບັດ ຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 1 ນັດຖັດໄປ.

11.7 ໄດ້ຮັບ ບັດແດງ ຈະຖືກ ສັ່ງໃຫ້ພັກ ການແຂ່ງຂັນ 3 ນັດຖັດໄປ ແລະ ຈະຖືກ ປັບໃໝ 1.000.000 ກີບ.

11.8 ກໍລະນີ ທີ່ບໍ່ສາມາດ ລະບຸວ່າ ໃຜເປັນຜູ້ກະທຳຜິດ ຢູ່ໃນ ຂອບເຂດ ເຕັກນິກ ຂອງ ສະໂມສອນ ໃດໜຶ່ງ ແມ່ນ ໃຫ້ ຫົວໜ້າ ຄູຝຶກ ຂອງ ສະໂມສອນ ດັ່ງກ່າວ ເປັນຜູ້ຮັບຜິດຊອບແທນ ໃນຄວາມຜິດ ທີ່ເກີດຂຶ້ນ. ຖ້າຫາກ ບໍ່ມີ ຫົວໜ້າ ຄູຝຶກ ແມ່ນໃຫ້ ຜູ້ຊ່ວຍ ຄູຝຶກ ເປັນຜູ້ຮັບຜິດຊອບແທນ ແລະ ຜູ້ຈັດການ ສະໂມສອນ ຕາມລຳດັບ.

11.9 ທຳລາຍ ວັດຖຸ ອຸປະກອນ, ຊັບສິນ ຂອງ ສະຖານທີ່ ຈັດການ ແຂ່ງຂັນ ຫຼື ບຸກຄົນອື່ນ ໃນສະຖານທີ່ ຈັດການແຂ່ງຂັນ ແມ່ນຈະຖືກ ປັບໃໝ 3.000.000 ກີບ ແລະ ໃຫ້ຊົດໃຊ້ ຄ່າເສຍຫາຍ ຕາມຄວາມເສຍຫາຍ ຕົວຈິງແລະ ພິຈາລະນາ ເພີ່ມ ການລົງໂທດ ຫຼື ມີ ການປັບໃໝ ເພີ່ມເຕີມ ອີງຕາມ ຜົນ ຂອງ ຄວາມເສຍຫາຍ ຈາກ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

11.10 ສະແດງ ທ່າທີ, ກິລິຍາ ທີ່ບໍ່ເໝາະສົມ ຕໍ່ໜ້າ ສາທາລະນະຊົນ ເຊັ່ນ: ເຂົ້າໄປ ປະທ້ວງ ກຳມະການ ຕັດສິນ ແລະ ຜູ້ຊ່ວຍ ກຳມະການ ຫຼື ຂົ່ມຂູ່ ເຈົ້າໜ້າທີ່ ຈັດການແຂ່ງຂັນ ເຢາະເຢີ້ຍ, ຍົ້ວຍຸ ອັນເປັນເຫດ ນຳໄປສູ່ ຄວາມບໍ່ສະຫງົບ ໃນ ສະຖານທີ່ ຈັດການແຂ່ງຂັນ, ສະແດງ ສັນຍາລັກ ຕ່າງໆ ຫຼື ພາສາກາຍ ທີ່ບໍ່ເໝາະສົມ ຕໍ່ ບຸກຄົນອື່ນ, ຊັກຊວນ ນັກກິລາ ອັນເປັນ ສາເຫດ ນຳໄປສູ່ ຄວາມຮຸນແຮງ ທັງກ່ອນ, ລະຫວ່າງ ຫຼື ຫຼັງ ການແຂ່ງຂັນ ຈະຖືກພັກ ການເຮັດ ໜ້າທີ່ 3 ນັດຖັດໄປ ແລະ ຈະຖືກ ປັບໃໝ 5.000.000 ກີບ/ຄັ້ງ.

11.11 ດ່າ ບຸກຄົນອື່ນ ດ້ວຍ ຄຳເວົ້າ ທີ່ຫຍາບຄາຍ, ເຢາະເຢີ້ຍ, ດູໝິ່ນ, ຂົ່ມຂູ່, ຢຽດສີຜິວ ເຊື້ອຊາດ ດ້ວຍ ພຶດຕິກຳ ທີ່ຈະແຈ້ງ ຫຼື ດ້ວຍ ພາສາກາຍ ແມ່ນພັກ ການເຮັດ ໜ້າທີ່ 2 ນັດ ແລະ ຈະຖືກ ປັບໃໝ 5.000.000 ກີບ/ຄັ້ງ. ແລະ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

11.12 ກໍລະນີ ທຳຮ້າຍ ບຸກຄົນອື່ນ ຈະມີໂທດ ດັ່ງຕໍ່ໄປນີ້ :

11.12.1 ເຈດຕະນາ ພະຍາຍາມ ທຳຮ້າຍ ຄູ່ກໍລະນີ ຈະຖືກພັກ 3 ນັດ ປັບໃໝສູງສຸດ 10.000.000 ກີບ/ຄັ້ງ, ຖ້າ ເກີດຂຶ້ນ ກັບກຳມະການ ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນ ແມ່ນເພີ່ມເປັນ 6 ນັດ ແລະ ປັບໃໝ ເພີ່ມ ສູງສຸດ 10.000.000 ກີບ ແລະ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງ ກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

11.12.2 ເຈດຕະນາ ເຮັດໃຫ້ເກີດ ອັນຕະລາຍ ຕໍ່ ຮ່າງກາຍ ຂອງ ຄູ່ກໍລະນີ ຈະຖືກພັກ 6 ນັດ ແລະ ຈະຖືກປັບ ໃໝສູງສຸດ 10.000.000 ກີບ/ຄັ້ງ ແລະ ຮັບຜິດຊອບ ຄ່າເສຍຫາຍ ໃນການປິ່ນປົວ ຄູ່ກໍລະນີ ອີງຕາມ ຄວາມເປັນຈິງ ທີ່ເກີດຂຶ້ນ ແລະ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

11.12.3 ເຈດຕະນາ ໃຫ້ເກີດ ອັນຕະລາຍ ຕໍ່ ຮ່າງກາຍ ຄູ່ກໍລະນີ ຈົນເຖິງ ຂັ້ນສາຫັດ ຈະບໍ່ໃຫ້ ເຂົ້າຮ່ວມ ແຂ່ງຂັນ ຕະຫຼອດ ຊີວິດ ປັບໃໝ ເງິນ ສູງສຸດ 50.000.000 ກີບ/ຄັ້ງ ແລະ ຮັບຜິດຊອບ ຄ່າເສຍຫາຍ ໃນການປິ່ນປົວ ຄູ່ກໍລະນີ ອີງຕາມ ຄວາມເປັນຈິງ ທີ່ເກີດຂຶ້ນ ແລະ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

11.12.4 ເປັນເຫດ ໃຫ້ເກີດ ອັນຕະລາຍ ຕໍ່ ຮ່າງກາຍ ຄູ່ກໍລະນີ ຈົນເຖິງຂັ້ນ ເສຍຊີວິດ ຈະບໍ່ໃຫ້ ເຂົ້າຮ່ວມ ແຂ່ງຂັນ ແລະ ບໍ່ໃຫ້ ຫຍຸ້ງກ່ຽວກັບ ກິດຈະກຳ ບານເຕະ ຕະຫຼອດ ຊີວິດ ປັບໃໝ ສູງສຸດ 100.000.000 ກີບ ແລະ ຮັບຜິດຊອບ ຄ່າເສຍຫາຍ ໃນການປິ່ນປົວ ຄູ່ກໍລະນີ ອີງຕາມ ຄວາມ

ເປັນຈິງ ທີ່ເກີດຂຶ້ນ ນອກຈາກນີ້ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ ກ່ຽວຂ້ອງ ຂອງ ສປປ ລາວ.

11.13 ເຈົ້າໜ້າທີ່ ສະໂມສອນ ປະທ້ວງ ໂດຍ ສັ່ງໃຫ້ ນັກກິລາ ບານເຕະ ຂອງຕົນ ຢຸດ ການແຂ່ງຂັນ ຊົ່ວຄາວ ຊຶ່ງ ເຮັດໃຫ້ ການແຂ່ງຂັນ ທີ່ກຳລັງ ດຳເນີນຢູ່ ຕ້ອງຢຸດລົງ ຊົ່ວຄາວ ຈະຖືກ ປັບໃໝ ເງິນ 10.000.000 ກີບ/ ຄັ້ງ ແລະ ຈະຖືກ ພິຈາລະນາ ລົງວິໄນ ຫ້າມ ປະຕິບັດ ໜ້າທີ່ ໃນການແຂ່ງຂັນ 1-3 ນັດ ອີງຕາມ ການ ພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

11.14 ເຈົ້າໜ້າທີ່ ສະໂມສອນ ທີ່ມີ ສ່ວນຮ່ວມ ຫຼື ສັ່ງໃຫ້ ນັກກິລາ ບານເຕະ ຂອງຕົນ ຢຸດ ການແຂ່ງຂັນ ໂດຍ ອອກຈາກ ການແຂ່ງຂັນ ແລະ ບໍ່ກັບມາ ແຂ່ງຂັນຕໍ່ ໃຫ້ສຳເລັດ ໃນນັດນັ້ນໆ ຈະຖືກ ປັບໃໝ ສູງສຸດ 20.000.000 ກີບ/ຄັ້ງ ແລະ ຈະຖືກ ພິຈາລະນາ ລົງວິໄນ ຫ້າມ ປະຕິບັດ ໜ້າທີ່ ໃນການແຂ່ງຂັນ 1-3 ນັດ ອີງຕາມ ການພິຈາລະນາ ຂອງອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ ພ້ອມທັງເສຍ ນັດດັ່ງກ່າວ ໃຫ້ກັບ ຄູ່ແຂ່ງຂັນ 0 ປະຕູຕໍ່ 3.

11.15 ວິພາກ ວິຈານ ສຕລ ຜ່ານ ຊ່ອງທາງ ຕ່າງໆ ເຮັດໃຫ້ເກີດ ຄວາມເສຍຫາຍ ຕໍ່ພາບລັກ, ກຽດສັກສີ, ຊື່ສຽງ ແລະ ການປະຕິບັດ ໜ້າທີ່ ຂອງ ສຕລ ໂດຍ ບໍ່ມີ ມູນ ຄວາມຈິງ ຈະຖືກ ປັບໃໝ ສູງສຸດ 50.000.000 ກີບ/ຄົນ/ຄັ້ງ ແລະ ພິຈາລະນາ ຫ້າມ ປະຕິບັດ ໜ້າທີ່ ໃນການແຂ່ງຂັນ ອີງຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ.

11.16 ປຸກລະດົມ ກອງເຊຍ ລົງໄປ ໃນເດີ່ນ ແຂ່ງຂັນ ເພື່ອກົດດັນ ກຳມະການ ຕັດສິນ ຫຼື ນຳໄປສູ່ ຄວາມບໍ່ ສະຫງົບ ຮຽບຮ້ອຍ ຂອງ ການແຂ່ງຂັນ ຈະມີໂທດດັ່ງນີ້:

11.16.1 ຖ້າ ເຫດການ ບໍ່ລຸກລາມ ແມ່ນໃຫ້ພັກ 5 ນັດ ໂທດດັ່ງກ່າວ ມີຜົນ ຕໍ່ ທຸກການແຂ່ງຂັນ ຂອງ ສຕລ, ຖ້າຍັງ ປະຕິບັດ ໂທດ ໃນ ລະດູການ ປັດຈຸບັນ ບໍ່ໝົດ ແມ່ນໃຫ້ ສືບຕໍ່ ໃນ ລະດູການ ຖັດ ໄປ. ປັບໃໝ ເງິນ 5.000.000 ກີບ/ຄົນ/ຄັ້ງ.

11.16.2 ຖ້າ ເຫດການ ລຸກລາມ ມີ ຄວາມເສຍຫາຍ ເປັນວົງກວ້າງ ແມ່ນໃຫ້ ພັກ 10 ນັດ ໂທດ ດັ່ງກ່າວ ມີຜົນ ຕໍ່ ທຸກການແຂ່ງຂັນ ຂອງ ສຕລ, ຖ້າຍັງ ປະຕິບັດ ໂທດ ໃນ ລະດູການ ປັດຈຸບັນ ບໍ່ ໝົດ ແມ່ນໃຫ້ ສືບຕໍ່ ໃນ ລະດູການ ຖັດໄປ. ປັບໃໝ ເງິນ 10.000.000 ກີບ/ຄົນ/ຄັ້ງ.

11.17 ເຈົ້າໜ້າທີ່ ສະໂມສອນໃດ ມີ ຄວາມຜິດ ກ່ຽວຂ້ອງ ກັບ ຢາເສບຕິດ ຈະຖືກ ລົງໂທດ ຕາມຫຼັກການ ດັ່ງ ລຸ່ມນີ້:

11.17.1 ຢູ່ໃນ ລະຫວ່າງ ການດຳເນີນ ຄະດີ ໃຫ້ພັກການ ເຮັດໜ້າທີ່ ໄປກ່ອນ ຈົນກວ່າ ຈະຮູ້ຜົນ ຂອງ ຄະດີ.

11.17.2 ກໍລະນີ ຄະດີ ມີຄວາມຜິດ ບໍ່ອະນຸຍາດ ໃຫ້ຜູ້ກ່ຽວ ເຂົ້າຮ່ວມ ການແຂ່ງຂັນ ກິລາ ບານເຕະ ເປັນ ເວລາ 5 ປີ ນັບຈາກມື້ ທີ່ຮັບຜົນ ຂອງ ການຕັດສິນ ຄະດີ.

11.18 ມີ ສ່ວນຮ່ວມ ຫຼື ກ່ຽວຂ້ອງ ກັບ ການລົ້ມບານ (Match manipulation) ໃນ ການແຂ່ງຂັນ ລາຍການ ໃດໜຶ່ງ ຂອງ ສຕລ ຫຼື ການແຂ່ງຂັນ ທາງການ ລາຍການ ອື່ນໆ ຈະຖືກ ຫ້າມ ບໍ່ໃຫ້ ເຂົ້າຮ່ວມ ທຸກ ກິດຈະກຳ ທີ່ກ່ຽວຂ້ອງ ກັບ ການແຂ່ງຂັນ ທີ່ ສຕລ ຈັດຂຶ້ນ ຕະຫຼອດ ຊີວິດ ແລະ ຈະຖືກ ປັບໃໝ 500.000.000 ກີບ. ນອກນີ້ແລ້ວ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ ກ່ຽວຂ້ອງ ຂອງ ສປປ ລາວ.

11.19 ໃນກໍລະນີ ເຈົ້າໜ້າທີ່ ສະໂມສອນ ຄົນໃດ ໄດ້ເຮັດຜິດ ໃນລະຫວ່າງ ການແຂ່ງຂັນ ແຕ່ກໍາມະການ ຕັດສິນ ບໍ່ໄດ້ລົງໂທດ (ບັດເຫຼືອງ) ຫຼື ໄລ່ອອກຈາກ ການແຂ່ງຂັນ (ບັດແດງ) ອະນຸ ກໍາມະການ ລະບຽບ ວິໄນ ຂອງ ສຕລ ສາມາດ ພິຈາລະນາ ການລົງໂທດ ຕໍ່ການກະທໍາ ດັ່ງກ່າວໄດ້ ໂດຍອີງ ຕາມລະບຽບ ສະບັບນີ້.

## ມາດຕາ 12: ໂທດ ແລະ ການວາງໂທດ ຕໍ່ສະໂມສອນ

12.1 ສະໂມສອນໃດນຸ່ງເຄື່ອງ (ໃສ່ຊຸດແຂ່ງຂັນ) ການແຂ່ງຂັນ ບໍ່ເປັນໄປ ຕາມລະບຽບ ການແຂ່ງຂັນ ຂອງແຕ່ລະລາຍການ ວາງອອກຈະຖືກປັບໃໝສູງສຸດ 7.000.000 ກີບ ເວັ້ນແຕ່ ຜູ້ປະເມີນ ກໍາມະການ ຕັດສິນ ແລະ ຄວບຄຸມ ການແຂ່ງຂັນ ຄູ່ນັ້ນໆ ມີການພິຈາລະນາ ເຫັນສົມຄວນ ເພື່ອໃຫ້ການແຂ່ງຂັນ ສາມາດ ດໍາເນີນ ຕໍ່ໄປໄດ້, ແຕ່ຫາກ ການແຂ່ງຂັນ ບໍ່ສາມາດ ດໍາເນີນ ໄປໄດ້ ຝ່າຍເຮັດຜິດ ຕ້ອງຮັບຜິດຊອບ ຊົດໃຊ້ ຄ່າເສຍຫາຍ ທີ່ເກີດຂຶ້ນ ຕາມການປະເມີນ ຂອງຝ່າຍຈັດ ການແຂ່ງຂັນ.

12.2 ສະໂມສອນໃດ ປ່ອຍໃຫ້ ບຸກຄົນອື່ນ ຊຶ່ງບໍ່ມີຊື່ ຢູ່ໃນ ລາຍຊື່ (Starting List) ຂອງສະໂມສອນ ຕົນເອງ ໃນມື້ ແຂ່ງຂັນ ມານັ່ງ ຢູ່ໃນ ມ້ານັ່ງ ສໍາຮອງ ພາຍໃນ ຂອບເຂດ ເຕັກນິກ ຈະຖືກປັບໃໝ ຄົນລະ 3.000.000 ກີບ/ຄົນ/ຄັ້ງ.

12.3 ສະໂມສອນໃດ ປະທ້ວງ ການຕັດສິນ ບໍ່ວ່າ ກໍລະນີໃດໆ ກໍຕາມ ຊຶ່ງເຮັດໃຫ້ ການແຂ່ງຂັນ ຢຸດສະງັກ ຊົ່ວຄາວ ຈະຖືກ ປັບໃໝ ສູງສຸດ 7.000.000 ກີບ ແລະ ຊົດໃຊ້ ຄ່າເສຍຫາຍ ທີ່ເກີດຂຶ້ນ ໂຕຈິງ.

12.4 ສະໂມສອນໃດ ບໍ່ ແຂ່ງຂັນ ຕໍ່ ຈົນໝົດເວລາ ຫຼື ນັກກິລາ ຍ່າງ ອອກຈາກ ການແຂ່ງຂັນ ຊຶ່ງ ນັກກິລາ, ເຈົ້າໜ້າທີ່ ສະໂມສອນ, ສະໂມສອນ, ກອງເຊຍ ສະໂມສອນນັ້ນ ເປັນຕົ້ນເຫດ ເຮັດໃຫ້ ການແຂ່ງຂັນ ຢຸດຕິລົງ ໂດຍອີງຕາມ ການລາຍງານ ຈາກຜູ້ຄວບຄຸມ ການແຂ່ງຂັນ ຫຼື ກໍາມະການ ຕັດສິນ ແມ່ນໃຫ້ ສະໂມສອນ ດັ່ງກ່າວ ນັ້ນເສຍ ໃຫ້ກັບຄູ່ແຂ່ງຂັນ 0 ປະຕູຕໍ່ 3 ແລະ ປັບໃໝ ສູງສຸດ 7.000.000 ກີບ ພ້ອມຊົດໃຊ້ ຄ່າເສຍຫາຍ ອື່ນໆ ທີ່ເກີດຂຶ້ນ ຕາມການລາຍງານ ຂອງ ຝ່າຍຈັດການແຂ່ງຂັນ.

12.5 ກໍລະນີ ສະໂມສອນໃດ ທີ່ບໍ່ໄດ້ມາ ແຂ່ງຂັນ ຫຼື ມາຮອດ ເດີ່ນແຂ່ງຂັນ ແລ້ວ ແຕ່ບໍ່ລົງ ແຂ່ງຂັນ ຕາມວັນ, ເວລາ ທີ່ກໍານົດໄວ້ ຊຶ່ງ ສາເຫດ ບໍ່ແມ່ນຍ້ອນຄວາມພ້ອມ ຫຼື ຄວາມບົກຜ່ອງ ຂອງສະຖານທີ່ ຈັດການແຂ່ງຂັນ ແມ່ນຈະ ຕັດສິນ ໃຫ້ ສະໂມສອນ ເສຍ ແລະ ຈະຖືກ ປັບໃໝ 5.000.000 ກີບ ແລະ ຕ້ອງຈ່າຍ ໃຫ້ ເຈົ້າໜ້າທີ່ ຈັດການແຂ່ງຂັນ ຕາມຄ່າໃຊ້ຈ່າຍ ຕົວຈິງ ແລະ ຕ້ອງຮັບຜິດຊອບ ຄ່າໃຊ້ຈ່າຍ ຂອງ ສະໂມສອນ ທີ່ມາຍາມ ຕາມຄ່າໃຊ້ຈ່າຍ ຕົວຈິງ.

12.6 ສະໂມສອນໃດ ລົ້ມບານ ໂດຍມີ ການຮູ້ເຫັນ, ສະໜັບສະໜູນ ເຈົ້າໜ້າທີ່ ສະໂມສອນ ໂຕເອງ ຈະຖືກ ລົງໂທດ ຕາມລະບຽບ ດັ່ງນີ້:

- ປັບໃໝ 1.000.000.000 ກີບ.
- ໃຫ້ ອອກຈາກ ລາຍການ ແຂ່ງຂັນ ທັນທີ.
- ສົ່ງເງິນ ສະນັບສະໜູນ ແລະ ເງິນອື່ນໆ ທີ່ໄດ້ຮັບໄປແລ້ວ ຄືນໃຫ້ ສຕລ.
- ບໍ່ອະນຸຍາດ ເຂົ້າຮ່ວມ ການແຂ່ງຂັນ ບານເຕະ ທຸກໆລາຍການ ທີ່ ສຕລ ຈັດຂຶ້ນ ອີກຕໍ່ໄປ.
- ປະຕິບັດ ມາດຕະການ ຕາມທີ່ບັນຍັດ ໄວ້ໃນ ມາດຕາ 110 ຂອງ ກົດໝາຍ ວ່າດ້ວຍ ກິລາ-ກາຍຍະກໍາ ສະບັບ ປີ 2019 ລວມເຖິງ ກົດໝາຍອື່ນ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

12.7 ຫ້າມ ບຸກຄົນ ຈາກ ສະໂມສອນ ທີ່ບໍ່ມີ ໜ້າທີ່ ກ່ຽວຂ້ອງ ເຂົ້າໄປ ຫ້ອງພັກ ຂອງ ເຈົ້າໜ້າທີ່ ຈັດການ ແຂ່ງຂັນ ຫຼື ຫ້ອງພັກ ຂອງ ສະໂມສອນ ຂອງ ຄູ່ແຂ່ງຂັນ ໂດຍ ບໍ່ມີ ເຫດຜົນ ອັນສົມຄວນ ບໍ່ວ່າຈະ ກ່ອນ, ລະຫວ່າງ ຫຼື ຫຼັງ ການແຂ່ງຂັນ ຖ້າມີ ການກະທຳຜິດ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.8 ຫາກມີ ຄວາມເສຍຫາຍ ທາງຊັບສິນ ແລະ ອື່ນໆ ເກີດຂຶ້ນ ໃນ ຫ້ອງພັກ ຂອງ ນັກກິລາ ແລະ ບໍ່ສາມາດ ຮູ້ວ່າ ນັກກິລາ ຫຼື ບຸກຄົນໃດ ເຮັດຜິດ ຫຼື ເຮັດໃຫ້ ເກີດ ຄວາມເສຍຫາຍ ສະໂມສອນນັ້ນ ຕ້ອງຮັບຜິດຊອບ ຊົດໃຊ້ ຄ່າເສຍຫາຍ ຕ່າງໆ ໃຫ້ແກ່ ຜູ້ເສຍຫາຍ ຕາມ ຄວາມເສຍຫາຍ ຕົວຈິງ ແລະ ຖືກປັບໃໝ ສູງສຸດ 7.000.000 ກີບ/ຄັ້ງ.

12.9 ໃນໄລຍະ ເວລາ ມີການແຂ່ງຂັນ ດຳເນີນຢູ່ ຫ້າມ ນັກກິລາ ຫຼື ເຈົ້າໜ້າທີ່ ສະໂມສອນ ໃຊ້ເຄື່ອງມື ສື່ສານ ໃນ ຂອບເຂດ ເຕັກນິກ ແລະ ບໍລິເວນ ເດີ່ນ ຍົກເວັ້ນ ການສື່ສານນັ້ນ ແມ່ນເພື່ອ ເຕັກນິກ ການວາງແຜນ ການຫຼິ້ນ ແລະ ເພື່ອ ການຮັກສາ ພະຍາບານ ເທົ່ານັ້ນ ໂດຍອີງ ຕາມກະຕິກາ ການແຂ່ງຂັນ (Law of The Game) ຫາກຝ່າຝືນ, ສະໂມສອນ ຕົ້ນສັງກັດ ຂອງ ຜູ້ກະທຳຜິດ ຕ້ອງຮັບຜິດຊອບ ຈະຖືກປັບໃໝ ສູງສຸດ 5.000.000 ກີບ ຫາກ ເຈົ້າໜ້າທີ່ ສະໂມສອນ ມີ ຄວາມຈຳເປັນ ຢ່າງອື່ນ ທີ່ຈະໃຊ້ ເຄື່ອງມື ສື່ສານ ກໍ ຕ້ອງ ຂໍ ອະນຸຍາດ ຈາກ ຜູ້ຄວບຄຸມ ການແຂ່ງຂັນ ເສຍກ່ອນ.

12.10 ຜູ້ຈັດການ ສະໂມສອນ ບໍ່ເຂົ້າຮ່ວມ ປະຊຸມ ຮ່ວມກັບ ຝ່າຍຈັດການແຂ່ງຂັນ ຕາມວັນ, ເວລາ ທີ່ກຳນົດໄວ້ ຈະຖືກ ປັບໃໝ ເປັນເງິນ ຈຳນວນ 2.000.000 ກີບ/ຄັ້ງ.

12.11 ບໍ່ສົ່ງ ຫົວໜ້າ ຄູຝຶກ ແລະ ນັກກິລາ ເຂົ້າຮ່ວມ ຖະແຫລງຂ່າວ ໃນກ່ອນ ຫຼື ຫຼັງ ການແຂ່ງຂັນ ຕາມ ການແຈ້ງ ຂອງ ຝ່າຍຈັດການແຂ່ງຂັນ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.12 ເຈົ້າໜ້າທີ່ ສະໂມສອນ ປອມແປງ ເອກສານ ອ້າງອີງ ຕ່າງໆ ຕໍ່ ສຕລ ສະໂມສອນ ຈະຖືກຕັດ 3 ຄະແນນ,

12.13 ສະໂມສອນ ບໍ່ຈ່າຍເງິນ ຄ່າແຮງງານ ນັກກິລາ ຫຼື ເຈົ້າໜ້າທີ່ ຂອງສະໂມສອນ ສະໂມສອນ ຈະຖືກຕັດ 6 ຄະແນນ.

12.14 ເດີ່ນ ແຂ່ງຂັນ ຂອງ ທີມເຈົ້າບ້ານ ຕ້ອງກຽມພ້ອມ ເພື່ອ ການແຂ່ງຂັນ ຫ້າມ ມີກິດຈະກຳ ໃດໆ ກ່ອນມື້ແຂ່ງຂັນ 2 ວັນ ແຕ່ຖ້າຈຳເປັນ ຕ້ອງມີ ແມ່ນຕ້ອງ ໄດ້ຮັບ ອະນຸຍາດ ຈາກ ຝ່າຍຈັດການແຂ່ງຂັນ ຢ່າງເປັນລາຍລັກ ອັກສອນ, ຖ້າຝ່າຝືນ ຈະຖືກປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.15 ປ່ອຍໃຫ້ ສັດລ້ຽງ ຫຼື ຜູ້ຊົມ ແລ່ນ ເຂົ້າໄປ ໃນ ເດີ່ນແຂ່ງຂັນ ໃນເວລາ ມີການແຂ່ງຂັນ ດຳເນີນຢູ່ ອັນເປັນເຫດ ໃຫ້ ກຳມະການ ຕັດສິນ ຕ້ອງຢຸດເກມ ເພື່ອ ແກ້ບັນຫາ ດັ່ງກ່າວ ສະໂມສອນ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.16 ເດີ່ນ ແຂ່ງຂັນ ຂອງ ສະໂມສອນ ເຈົ້າບ້ານ ບໍ່ສາມາດ ຈັດການ ແຂ່ງຂັນໄດ້ ຕາມ ກຳນົດ ເວລາ ທີ່ກຳນົດໄວ້ ບໍ່ວ່າຈະ ກໍລະນີໃດ ກໍຕາມ (ນອກຈາກ ເຫດສຸດວິໄສ ຫຼື ໄພ ທຳມະຊາດ ທີ່ບໍ່ສາມາດ ຄວບຄຸມໄດ້) ຈະຖືກປັບເສຍ 0 ປະຕູຕໍ່ 3.

12.17 ຖ້າ ໄຟສະຫວ່າງ ສຳລັບ ໃຊ້ ໃນ ການແຂ່ງຂັນ ຂອງ ເດີ່ນ ສະໂມສອນ ເຈົ້າບ້ານ ມີການຂັດຂ້ອງ ຫຼາຍກວ່າ 3 ຄັ້ງ ຫຼື ຂັດຂ້ອງ ເປັນໄລຍະ ເວລາ ລວມກັນ 60 ນາທີ ສະໂມສອນ ເຈົ້າບ້ານ ຕ້ອງຮັບຜິດຊອບ ຄ່າເສຍຫາຍ ຕ່າງໆ ທີ່ເກີດຂຶ້ນ ແລະ ຖືກປັບ ໃຫ້ເປັນທີມເສຍ ໃຫ້ກັບ ຄູ່ແຂ່ງຂັນ 0 ປະຕູຕໍ່ 3.

12.18 ບ່ອນເຮັດວຽກ ແລະ ສິ່ງອຳນວຍ ຄວາມສະດວກ ໃນສະຖານທີ່ ຈັດການແຂ່ງຂັນ ສຳລັບ ໃຊ້ ປະໂຫຍດ ໃນ ການແຂ່ງຂັນ ຕ້ອງເປັນໄປ ຕາມ ລະບຽບ ຂໍ້ບັງຄັບ ຂອງ ການຈັດການແຂ່ງຂັນ ໃນແຕ່ລະ ລາຍການ ແຂ່ງຂັນ ຖ້າມີ ການກະທຳຜິດ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.19 ບໍ່ມີ ປ້າຍ ບອກທິດທາງ ແລະ ຂອບເຂດ ໃນ ສະໜາມ ແຂ່ງຂັນ ແລະ ບໍ່ມີ ບ່ອນຈອດລົດ ໃຫ້ ເຈົ້າໜ້າທີ່ ຈັດການແຂ່ງຂັນ, ແຂກ ວີໄອພີ ແລະ ທີມມາຢາມ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.20 ບໍ່ມີ ການຈັດສັນ ບ່ອນນັ່ງ ກອງເຊຍ ໃຫ້ ເປັນລະບຽບ ຕາມ ກົດລະບຽບ ການແຂ່ງຂັນ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.21 ບໍ່ກະກຽມ ສະຖານທີ່ ເຮັດວຽກ ໃນ ສະໜາມ ແຂ່ງຂັນ ໃຫ້ ເຈົ້າໜ້າທີ່ ຈັດການແຂ່ງຂັນ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ.

12.22 ກໍລະນີ ຜູ້ປະກາດ ປະຈຳ ສະໜາມ ຂອງ ສະໂມສອນ ເຈົ້າບ້ານ ຫຼື ບຸກຄົນໃດ ຫາກໃຊ້ ເຄື່ອງ ຂະຫຍາຍ ສຽງ ຫຼື ອຸປະກອນ ອື່ນໆ ໂຄສະນາ ຂົ່ມຂູ່, ເຢາະເຢີ້ຍ, ດູໝິ່ນ, ຢຽດຫຍາມ, ຢຽດສີຜິວ, ລະເມີດ ບຸກຄົນ ຫຼື ກອງເຊຍ ທີ່ຈະເປັນເຫດ ກໍ່ໃຫ້ເກີດ ຄວາມວຸ້ນວາຍ ໃນ ສະໜາມ ບໍ່ວ່າ ຈະເກີດ ກ່ອນ, ລະຫວ່າງ ຫຼື ຫຼັງ ຈາກ ຈົບການແຂ່ງຂັນ ກໍຕາມ ຈະຖືກ ປັບໃໝ ສູງສຸດ 10.000.000 ກີບ/ຄັ້ງ.

12.23 ຄວາມບົກພ່ອງ ໃນ ການຮັກສາ ຄວາມປອດໄພ ໃນມື້ ແຂ່ງຂັນ :

12.23.1 ບົກພ່ອງ ໃນ ການກວດກາ ຄວບຄຸມ ກອງເຊຍ ປ່ອຍ ໃຫ້ເອົາ ຕຸກ ຫຼື ປ໋ອງນ້ຳ ທີ່ບໍ່ທັນໄດ້ເປີດ ຝາ, ກະໂພກ, ດອກໄມ້ໄຟ ຫຼື ວັດສະດຸ ອັນຕະລາຍ ອື່ນໆ ເຂົ້າໄປ ໃນ ສະໜາມ ຈະຖືກ ປັບໃໝ ສູງສຸດ 10.000.000 ກີບ/ຄັ້ງ.

12.23.2 ກໍລະນີ ສະໂມສອນ ເຈົ້າບ້ານ ບໍ່ສາມາດ ປ້ອງກັນ, ຄວບຄຸມ ຫຼື ລະງັບ ເຫດການ ຕ່າງໆ ທີ່ເກີດຂຶ້ນ ໃນສະຖານທີ່ ຈັດການແຂ່ງຂັນ ທີ່ເກີດຈາກ ຄວາມບົກພ່ອງ ຂອງ ສະໂມສອນເອງ ຈະຖືກ ປັບໃໝ ສູງສຸດ 10.000.000 ກີບ/ຄັ້ງ ແລະ ຈະຖືກ ປັບປ່ຽນ ຕາຕະລາງ ແຂ່ງຂັນ ໄປເປັນ ສະໂມສອນ ມາ ຢາມ ຈົນກວ່າ ຈະມີ ການແກ້ໄຂ ແລະ ຮັບຮອງ ຈາກຝ່າຍ ຈັດການແຂ່ງຂັນ.

12.23.3 ບົກພ່ອງ ປ່ອຍໃຫ້ ບຸກຄົນ, ຫຼື ກຸ່ມຄົນ ນຳເອົາ ປ້າຍເຊຍ ທີ່ສະແດງ ເຖິງການ ຍົວຍຸ, ຂົ່ມຂູ່, ດູໝິ່ນ ຄູ່ແຂ່ງຂັນ, ກອງເຊຍ ຄູ່ແຂ່ງຂັນ ຫຼື ຂໍ້ຄວາມ ອັນບໍ່ເໝາະສົມ ຕໍ່ສາທາລະນະຊົນ ຫຼື ເປັນການເຊື່ອມ ເສຍ ຕໍ່ຊື່ສຽງຂອງ ສຕລ ຫຼື ບຸກຄົນ ທີສາມ ໄປສະແດງ ໃນບໍລິເວນ ຈັດການແຂ່ງຂັນ ຈະຖືກ ປັບໃ ໝ ສູງສຸດ 10.000.000 ລ້ານກີບ/ຄັ້ງ.

12.24 ໃນກໍລະນີ ທີ່ ສຕລ ໄດ້ສົ່ງ ໜັງສືເຊີນ ນັກກິລາ ຈາກ ສະໂມສອນ ເພື່ອ ເຂົ້າຮ່ວມ ລາຍການ ແຂ່ງຂັນ ບານເຕະ ນາໆຊາດ ຫຼື ເຂົ້າຮ່ວມ ທີມ ຊາດລາວ ສະໂມສອນ ຕ້ອງໃຫ້ ຄວາມຮ່ວມມື ປ່ອຍຕົວ ນັກກິລາ ຖ້າຫາກ ບໍ່ໃຫ້ ຄວາມຮ່ວມມື ໂດຍ ບໍ່ມີ ເຫດຜົນ ອັນສົມຄວນ, ນັກກິລາ ຈະຖືກ ພັກ ການແຂ່ງຂັນ 2 ນັດ ແລະ ສະໂມສອນ ຈະຖືກ ປັບໃໝ ສູງສຸດ 50.000.000 ກີບ/ກໍລະນີ

## ມາດຕາ 13: ໂທດ ແລະ ການວາງໂທດ ຕໍ່ ກອງເຊຍ

13.1 ກອງເຊຍ ຄົນໃດ, ກຸ່ມໃດ ທີ່ປ້ອຍດ່າ ນັກກິລາ, ເຈົ້າໜ້າທີ່ ສະໂມສອນ, ເຈົ້າໜ້າທີ່ ຈັດການແຂ່ງຂັນ ດ້ວຍ ຄຳເວົ້າ ທີ່ຫຍາບຄາຍ, ເຢາະເຢີ້ຍ, ດູໝິ່ນ, ຂົ່ມຂູ່ ເຊັ່ນ: ການຢຽດ ສີຜິວ, ເຊື້ອຊາດ ດ້ວຍ ພຶດຕິກຳ ທີ່ ຈະແຈ້ງ ດ້ວຍ ພາສາກາຍ, ຄຳເວົ້າ, ປ້າຍເຊຍ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄົນ/ຄັ້ງ ພ້ອມທັງ

ຖືກຫ້າມ ເຂົ້າຊິມ ການແຂ່ງຂັນ ຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ ແລະ ປະຕິບັດ ມາດຕະການ ທາງກົດໝາຍ ຕໍ່ ຜູ້ກະທຳຜິດ.

13.2 ບຸກຄົນໃດ ຫຼື ກຸ່ມຄົນໃດ ຂ້າມຜ່ານ ຮົ້ວກັ້ນ ຂອບເດີ່ນ ການແຂ່ງຂັນ ຫຼື ເຂົ້າໄປ ໃນເດີ່ນ ແຂ່ງຂັນ ທັງ ກ່ອນ, ລະຫວ່າງ ຫຼື ຫຼັງ ການແຂ່ງຂັນ ໂດຍ ບໍ່ໄດ້ ຮັບອະນຸຍາດ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄົນ/ຄັ້ງ ພ້ອມທັງ ຖືກຕັດສິດ ເຂົ້າຊົມ ການແຂ່ງຂັນ ຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

13.3 ໃຊ້ ວັດສະດຸ ຫຼື ອຸປະກອນ ໃດໆ ກໍຕາມ ທີ່ກໍ່ໃຫ້ເກີດ ການລົບກວນ ການຕັດສິນ ຂອງ ກຳມະການ ແລະ ນັກກິລາ ໃນລະຫວ່າງ ການແຂ່ງຂັນ ເຊັ່ນ: ການເປົ່າ ໝາກຫວີດ, ເປົ່າແກ, ແກໄຟຟ້າ, ຈູດພຸ, ຈູດກະໂພກ ແລະ ອື່ນໆ ທີ່ເປັນ ອັນຕະລາຍ ແລະ ລົບກວນ ການແຂ່ງຂັນ ບໍ່ວ່າຈະຢູ່ ດ້ານໃນ ຫຼື ດ້ານນອກ ອັດສະຈັນ ທັງກ່ອນ, ລະຫວ່າງ ແລະ ຫຼັງ ການແຂ່ງຂັນ ຈົບແລ້ວ ຈະຖືກ ປັບໃໝ ສູງສຸດ 10.000.000 ກີບ/ຄົນ/ຄັ້ງ ພ້ອມທັງ ຖືກຫ້າມ ເຂົ້າຊົມ ການແຂ່ງຂັນ ຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ. ຫາກ ຜົນການກະທຳ ດັ່ງກ່າວ ກໍ່ໃຫ້ເກີດ ອັນຕະລາຍ ຕໍ່ ບຸກຄົນ ໃດໜຶ່ງ ຫຼື ເກີດ ຄວາມເສຍ ຫາຍ ຕໍ່ ການແຂ່ງຂັນ ສະໂມສອນ ຕົ້ນສັງກັດ ຂອງ ກອງເຊຍ ທີ່ເຮັດຜິດ ຕ້ອງ ຮັບຜິດຊອບ ຄ່າເສຍຫາຍ ຕ່າງໆ ຂອງ ຊັບສິນ, ຄ່າພະຍາບານ ຕໍ່ ຜູ້ບາດເຈັບ ແລະ ປັບໃໝ ສະໂມສອນ 10.000.000 ກີບ/ຄັ້ງ. ນອກຈາກນີ້ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

13.4 ກອງເຊຍ ຄົນໃດ, ຫຼື ກຸ່ມບຸກຄົນໃດ, ແກວ່ງ ວັດຖຸ ສິ່ງຂອງ ລົງໄປ ໃນ ເດີ່ນແຂ່ງຂັນ ໃສ່ ນັກກິລາ, ເຈົ້າໜ້າທີ່ ສະໂມສອນ, ກອງເຊຍ ຄູ່ແຂ່ງຂັນ, ເຈົ້າໜ້າທີ່ ຈັດການແຂ່ງຂັນ ຊຶ່ງ ເຮັດໃຫ້ເກີດ ຄວາມບໍ່ປອດໄພ ຈະ ຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄົນ/ຄັ້ງ ພ້ອມທັງ ຖືກຕັດສິດ ເຂົ້າຊົມ ການແຂ່ງຂັນ ຕາມ ການ ພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ. ນອກຈາກນີ້ ຍັງຕ້ອງມີ ຄວາມຮັບຜິດຊອບ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

13.5 ກອງເຊຍຄົນໃດ ຫຼື ກຸ່ມຄົນໃດ ກໍ່ໃຫ້ເກີດ ການທະເລາະ ວິວາດ ໃນ ສະຖານທີ່ ຈັດການແຂ່ງຂັນ, ສະໂມສອນ ຂອງ ກອງເຊຍ ທີ່ກໍ່ເຫດ ຕ້ອງ ຮັບຜິດຊອບ ໂດຍ ຖືກປັບໃໝ ສູງສຸດ 20.000.000 ກີບ/ຄັ້ງ ຕັດສິດ ກອງເຊຍ ທີ່ກໍ່ເຫດ ຫ້າມ ເຂົ້າຊົມ ການແຂ່ງຂັນ ຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ ແລະ ປະຕິບັດ ມາດຕະການ ທາງກົດໝາຍ ຕໍ່ ກອງເຊຍ ຜູ້ກະທຳຜິດ.

13.6 ກອງເຊຍ ຄົນໃດ ຫຼື ກຸ່ມຄົນໃດ ທຳຮ້າຍ ບຸກຄົນອື່ນ ໃນ ສະຖານທີ່ ຈັດການແຂ່ງຂັນ ທີ່ເປັນອັນຕະລາຍ ແກ່ ຮ່າງກາຍ ແລະ ຊີວິດ ຈະຖືກ ປັບໃໝ ສູງສຸດ 10.000.000 ກີບ/ຄົນ/ຄັ້ງ, ໃຊ້ແທນ ຄ່າພະຍາບານ, ຄ່າເສຍຫາຍ ອື່ນໆ ຕາມ ຄວາມຜິດ ຕົວຈິງພ້ອມທັງ ຖືກຕັດສິດ ເຂົ້າຊົມ ການແຂ່ງຂັນ ຕາມ ການ ພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ. ນອກຈາກນີ້ແລ້ວ ຍັງຈະຖືກ ປະຕິບັດ ມາດ ຕະການ ທາງກົດໝາຍ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

13.7 ກອງເຊຍ ຄົນໃດ ຫຼື ກຸ່ມຄົນໃດ ຫາກນຳເຂົ້າ ຫຼື ມີໄວ້ ໃນຄອບຄອງ ຢາເສບຕິດ ຫຼື ສິ່ງເສບຕິດ ອື່ນໆ ລວມເຖິງ ອາຫານ ແລະ ເຄື່ອງດື່ມ ທີ່ມີ ສ່ວນປະສົມ ຢາເສບຕິດ ຫຼື ຄ້າຍຄືກັບ ຢາເສບຕິດ ຕາມທີ່ ກົດ ໝາຍ ກຳນົດ ເພື່ອເສບ ຫຼື ຈຳໜ່າຍ ຫຼື ວັດຖຸປະສົງອື່ນ ໃນ ສະຖານທີ່ ຈັດການແຂ່ງຂັນ ຈະຖືກ ປັບໃໝ ສູງສຸດ 5.000.000 ກີບ/ຄັ້ງ/ຄົນ ແລະ ຈະຖືກ ນຳສົ່ງ ໃຫ້ ເຈົ້າໜ້າທີ່ ດຳເນີນ ຄະດີ ຕາມລະບຽບ ກົດ ໝາຍ.

## ມາດຕາ 14: ໂທດ ແລະ ການວາງໂທດ ຕໍ່ ເຈົ້າໜ້າທີ່ ຈັດການແຂ່ງຂັນ

14.1 ເຈົ້າໜ້າທີ່ ຈັດການແຂ່ງຂັນ ຄົນໃດ ທີ່ບົກພ່ອງ ຕໍ່ ການປະຕິບັດ ໜ້າທີ່ ແລະ ເຮັດໃຫ້ມີ ຜູ້ເສຍ ຜົນປະໂຫຍດ ຈາກຄວາມບົກພ່ອງນັ້ນ ຜູ້ກ່ຽວ ຈະຖືກ ພິຈາລະນາ ລົງວິໄນ ໂດຍ ອະນຸ ກຳມະການ ລະບຽບວິໄນ ຂອງ ສຕລ ຕາມ ຄວາມບົກພ່ອງ ທີ່ເກີດຂຶ້ນ.

14.2 ເຈົ້າໜ້າທີ່ ຈັດການແຂ່ງຂັນ ຄົນໃດ ທີ່ສວຍໃຊ້ ໜ້າທີ່ ຕຳແໜ່ງ ໃນ ການແຂ່ງຂັນ ໄປຫາ ຜົນປະໂຫຍດສ່ວນຕົວ, ຜູ້ກ່ຽວ ຈະຖືກ ລົງໂທດ ພັກ ການປະຕິບັດ ໜ້າທີ່ ໃນ ການແຂ່ງຂັນ ໃນ ລະດູການນັ້ນ ທັນທີ ແລະ ຈະຖືກ ພິຈາລະນາ ລົງ ວິໄນ ເພີ່ມເຕີມ ຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ.

14.3 ເຈົ້າໜ້າທີ່ ຈັດການແຂ່ງຂັນ ຄົນໃດ ທີ່ມີ ສ່ວນກ່ຽວຂ້ອງ ກັບ ການລໍ່ອກ ຜົນການ ແຂ່ງຂັນ ຫຼື ລົ້ມບານ ຈະຖືກ ຕັດສິນ ລົງໂທດ ຫ້າມ ເຄື່ອນໄຫວ ໃນທຸກໆ ກິດຈະກຳ ທີ່ກ່ຽວຂ້ອງ ກັບ ການແຂ່ງຂັນ ບານເຕະ ທີ່ຈັດຂຶ້ນ, ຄຸ້ມຄອງ ແລະ ອະນຸມັດ ໂດຍ ສຕລ ຕະຫຼອດ ຊີວິດ ຂອງ ຜູ້ກ່ຽວ ແລະ ປັບໃໝ ຕາມ ການພິຈາລະນາ ຂອງ ອະນຸ ກຳມະການ ລະບຽບ ວິໄນ ຂອງ ສຕລ. ນອກຈາກນັ້ນ ຈະຖືກ ດຳເນີນ ຄະດີ ຕາມ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

# ພາກທີ 5

## ບົດບັນຍັດ ສຸດທ້າຍ

### ມາດຕາ 15: ຂອບເຂດ ຂອງ ການຈັດຕັ້ງ ປະຕິບັດ

ສະໂມສອນ, ເຈົ້າໜ້າທີ່ ທີມ ແລະ ນັກກິລາຕ້ອງ ປະຕິບັດ ຕາມ ລະບຽບ ວິໄນ, ລະບຽບ ການປະພຶດ ແລະ ລະບຽບ ຂໍ້ບັງຄັບ ອື່ນໆ ທີ່ ສຕລ ວາງອອກ ແລະ ປະກາດ ນໍາໃຊ້ ຢ່າງເຄັ່ງຄັດ.

### ມາດຕາ 16: ການຈັດຕັ້ງ ປະຕິບັດ ນິຕິກໍາ ສະບັບອື່ນ

ຫາກ ການລົງໂທດ ທີ່ກໍານົດໄວ້ ໃນ ລະບຽບ ການລົງໂທດ ສະບັບນີ້ ບໍ່ຄອບຄຸມ ເຖິງ ຄວາມຜິດ ໃດໜຶ່ງ ທີ່ເກີດຂຶ້ນ ຫຼັງຈາກ ອອກ ລະບຽບ ສະບັບນີ້ ຫ້ອງການ ນິຕິກໍາ, ອະນຸ ກໍາມະການ ລະບຽບ ວິໄນ ແລະ ອະນຸ ກໍາມະການ ອຸທອນ ຂອງ ສຕລ ສາມາດ ນໍາໃຊ້ ລະບຽບ ຂອງ ເອເອຟຊີ (AFC) ຫຼື ຟີຟາ (FIFA) ເປັນ ບ່ອນອີງໄດ້.

### ມາດຕາ 17: ມູນຄ່າ ການປັບໃໝ

ສໍາລັບ ອັດຕາ ຂອງ ການປັບໃໝ ທີ່ໄດ້ ກໍານົດໄວ້ ຢູ່ໃນ ລະບຽບ ສະບັບນີ້ ແມ່ນບັງຄັບໃຊ້ ກັບ ການ ແຂ່ງຂັນ ບານເຕະ ລະດັບ ສາກົນ ທີ່ທີມຊາດ ລາວ ໄດ້ເຂົ້າຮ່ວມ ແຂ່ງຂັນ ແລະ ການແຂ່ງຂັນ ໃນລະດັບ ລາວ ລີກໜຶ່ງ ເທົ່ານັ້ນ.

ສໍາລັບ ການແຂ່ງຂັນ ໃນລາຍການອື່ນ ທີ່ເປັນ ລາຍການ ຮອງລົງມາ ເຊັ່ນ: ການແຂ່ງຂັນ ບານເຕະ ຍິງ, ລາວລີກສອງ, ຟຸດຊໍ ແລະ ລາຍການອື່ນ ທີ່ ສຕລ ໄດ້ຈັດຂຶ້ນ ແມ່ນໃຫ້ ປັບໃໝ ຕໍ່າສຸດ 20% ແລະ ສູງສຸດ ບໍ່ ເກີນ 80% ຂອງ ອັດຕາ ປັບໃໝ ທີ່ໄດ້ກໍານົດໄວ້ ຢູ່ໃນ ລະບຽບ ສະບັບນີ້.

### ມາດຕາ 18: ຜົນສັກສິດ

ລະບຽບ ສະບັບນີ້ ໄດ້ຖືກ ຮັບຮອງເອົາ ໂດຍ ກອງປະຊຸມ ຄົບຄະນະ ຂອງ ສະຫະພັນ ບານເຕະ ແຫ່ງຊາດ ລາວ ຄັ້ງວັນທີ 10 ທັນວາ 2023. ຊຶ່ງ ຈະມີ ຜົນສັກສິດ ແລະ ບັງຄັບ ໃຊ້ ນັບແຕ່ ວັນທີ່ ລົງ ລາຍເຊັນ ຂອງ ທ່ານ ປະທານ ສະຫະພັນ ບານເຕະ ແຫ່ງຊາດ ລາວ ເປັນຕົ້ນໄປ.

ປະທານ ສະຫະພັນບານເຕະ ແຫ່ງຊາດລາວ

ສ.ຕ.ລ LAO FOOTBALL FEDERATION

**ວິເພັດ ສີຫາຈັກຣ**